


# ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

one vision
one identity
one community

# ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

ກອງເລຂາອາຊຽນ

ນະຄອນຫຼວງຈາກາຕາ

ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ASEAN) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967, ຊຶ່ງບັນດາປະເທດສະມາຊິກປະກອບມີ: ບຣູໄນ, ກໍາປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ. ກອງເລຂາຂອງສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ASEAN) ຕັ້ງຢູ່ນະຄອນຫຼວງຈາກາຕາ, ປະເທດອິນໂດເນເຊຍ.

## ຂໍ້ມູນຕິດຕໍ່:


ກອງເລຂາອາຊຽນ

ພະແນກປະຊາສໍາພັນ

70A ຈາລັນ ສິດສິງກາມັງກາຣາຈາ, ຈາກະຕາ 12110, ອິນໂດເນເຊຍ

ໂທ: (62 21) 724-3372, 726-2991

ແຟັກ: (62 21) 739-8234, 724-3504

ອີເມວ: public@asean.org


## ຂໍ້ມູນການຈັດພິມ


ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

ຈາກະຕາ, ກອງເລຂາອາຊຽນ, ມັງກອນ 2016

338.4791

1. ອາຊຽນ - ການທ່ອງທ່ຽວ
2. ມາດຕະຖານການທ່ອງທ່ຽວ - ຄູ່ມືແນະນໍາການທ່ອງທ່ຽວ

ISBN 978-602-0980-72



ສະຫງວນລິຂະສິດ, ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ 2016.

# ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

# ສາລະບານ


**1. ຄຳນຳ** ........ 10

**2. ພາກສະເໜີ** ........ 11

**3. ຂອບເຂດ** ........ 12

**4. ຄຳສັບ ແລະ ຄວາມໝາຍ** ........ 12

4.1. ຄວາມສະອາດ ........ 12

4.2. ເຂດຈ່າຍຄ່າທຳນຽມຄວາມແອອັດ ........ 12

4.3. ພາຫານະທີ່ເປັນມິດກັບສິ່ງແວດລ້ອມ ........ 13

4.4. ລະບຽບການດ້ານສິ່ງແວດລ້ອມ ........ 13

4.5. ພື້ນທີ່ສີຂຽວ ........ 13

4.6. ສູນປິ່ນປົວສຸຂະພາບ ........ 13

4.7. ການເຄື່ອນໄຫວທີ່ຜິດກົດໝາຍ ........ 13

4.8. ກົດເກນຕ່າງໆ (Norms) ........ 13

4.9. ລາຍການທ່ອງທ່ຽວ ........ 13

4.10. ມົນລະພິດ (ທາງນ້ຳ, ທາງອາກາດ, ທາງສຽງ) ........ 13

4.11. ພື້ນທີ່ສາທາລະນະ ........ 13

4.12. ການປູກຈິດສຳນຶກ ........ 14

4.13. ການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່ ........ 14

4.14. ພະລັງງານທົດແທນ ........ 14

4.15. ການບໍລິຫານຄວາມສ່ຽງ ........ 14

4.16. ເມືອງທ່ອງທ່ຽວ ........ 14

4.17. ໂຄງລ່າງພື້ນຖານການທ່ອງທ່ຽວ ........ 14

4.18. ຕຳຫຼວດທ່ອງທ່ຽວ ........ 14

4.19. ຜັງເມືອງ ........ 15

4.20. ການຈັດການສິ່ງເສດເຫຼືອ ........ 15

**5. ບັນດາຕົວຊີ້ວັດ** ........ 15

5.1. ຕົວຊີ້ວັດການຄຸ້ມຄອງສິ່ງແວດລ້ອມ ........ 15
5.1.1. ຜັງເມືອງ ........ 16
5.1.2. ລະບຽບການດ້ານສິ່ງແວດລ້ອມ ........ 16
5.1.3. ມົນລະພິດ (ທາງນ້ຳ, ທາງອາກາດ ແລະ ທາງສຽງ) ........ 16
5.1.4. ການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມ ........ 16
5.1.5. ການນຳໃຊ້ພະລັງງານແບບຍືນຍົງ ........ 16
5.2. ຕົວຊີ້ວັດຄວາມສະອາດ ........ 17
5.2.1. ຄວາມສະອາດຂອງສະຖານທີ່ສາທາລະນະ ........ 17
5.2.2. ຄວາມສະອາດຂອງຫ້ອງນ້ຳສາທາລະນະ ........ 17
5.2.3. ຄວາມສະອາດຂອງສະຖານທີ່ທ່ອງທ່ຽວ (ຫໍພິພິທະພັນ, ວັດວາອາຮາມ, ສວນສາທາລະນະ, ຫາດຊາຍ ແລະ ອື່ນໆ) ........ 17
5.2.4. ຄວາມສະອາດຕາມຖະໜົນສາຍຫຼັກ ........ 18
5.3. ຕົວຊີ້ວັດການຈັດການສິ່ງເສດເຫຼືອ ........ 18
5.3.1. ການຈັດການນ້ຳເປື້ອນ ........ 18
5.3.2. ການຈັດການຂີ້ເຫຍື້ອ ........ 18
5.3.3. ການຈັດການ ແລະ ບຳບັດນ້ຳເປື້ອນ ........ 18
5.3.4. ການຈັດການ ແລະ ກຳຈັດຂີ້ເຫຍື້ອ ........ 19
5.3.5. ການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່ ........ 19
5.4. ຕົວຊີ້ວັດການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ ........ 19
5.4.1. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ປະຊາຊົນໃນທ້ອງ ຖິ່ນ ........ 20
5.4.2. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ຜູ້ປະກອບການ ທ່ອງທ່ຽວ ........ 20
5.4.3. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ນັກທ່ອງທ່ຽວ ........ 20
5.5. ຕົວຊີ້ວັດພື້ນທີ່ສີຂຽວ ........ 20

5.5.1. ຈຳນວນພື້ນທີ່ສີຂຽວໃນຕົວເມືອງ ........................................................................ 21
5.5.2. ການບຳລຸງຮັກສາ ແລະ ຄຸ້ມຄອງພື້ນທີ່ສີຂຽວ ................................................................ 21
5.6. ຕົວຊີ້ວັດຄວາມປອດໄພດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມສະຫງົບໃນຕົວເມືອງ .............. 21
5.6.1. ຄວາມປອດໄພດ້ານສຸຂະພາບ .................................................................................. 22
5.6.2. ຄວາມປອດໄພ ແລະ ການຮັກສາຄວາມສະຫງົບໃນຕົວເມືອງ ............................................. 22
5.6.3. ການບັງຄັບໃຊ້ກົດໝາຍ ເພື່ອປ້ອງກັນອາຊະຍາກຳ ແລະ ການຄ້າໂສເພນີເດັກ, ຢາເສບຕິດ ແລະ ອື່ນໆ ........................................................................................................ 22
5.6.4. ແຜນການບໍລິຫານຄວາມສ່ຽງ ................................................................................. 22
5.7. ຕົວຊີ້ວັດໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ .......................... 22
5.7.1. ການວາງແຜນການທ່ອງທ່ຽວ .................................................................................. 23
5.7.2. ສູນຂໍ້ມູນ, ປ້າຍຊີ້ບອກ ແລະ ແຜນທີ່ທ່ອງທ່ຽວ ........................................................... 23
5.7.3. ທີ່ຕັ້ງສູນການຄ້າ ແລະ ຮ້ານຂາຍເຄື່ອງ ....................................................................... 23
5.7.4. ສະຖານທີ່ພັກຜ່ອນ (ສະຖານທີ່ທ່ອງທ່ຽວ, ສວນສາທາລະນະ, ເດີ່ນກິລາ ແລະ ບ່ອນພັກຜ່ອນ)... 23
5.7.5. ລະດັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ.................................................................. 23
**6. ເງື່ອນໄຂຂອງມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ** ...................................................... 24
6.1. ຕາຕະລາງປະເມີນຜົນການຄຸ້ມຄອງສິ່ງແວດລ້ອມ ມີຈຳນວນ 5 ຕົວຊີ້ວັດ .................................. 24
6.2. ຕາຕະລາງປະເມີນຜົນຄວາມສະອາດ ມີຈຳນວນ 4 ຕົວຊີ້ວັດ ................................................. 26
6.3. ຕາຕະລາງປະເມີນຜົນການຈັດການສິ່ງເສດເຫຼືອ ມີຈຳນວນ 5 ຕົວຊີ້ວັດ .................................... 28
6.4. ຕາຕະລາງປະເມີນຜົນການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ ມີຈຳນວນ 3 ຕົວຊີ້ວັດ. ........................................................................................ 31
6.5. ຕາຕະລາງປະເມີນຜົນພື້ນທີ່ສີຂຽວ ມີຈຳນວນ 2 ຕົວຊີ້ວັດ...................................................... 32
6.6. ຕາຕະລາງປະເມີນຜົນຄວາມປອດໄພດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມສະຫງົບໃນຕົວເມືອງ ມີຈຳນວນ 4 ຕົວຊີ້ວັດ ........................................................................................... 33
6.7. ຕາຕະລາງປະເມີນຜົນໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ມີຈຳນວນ 5 ຕົວຊີ້ວັດ...................................................................................................... 35
**7. ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ - ເຄື່ອງໝາຍ** ...................................................... 37

7.1. ເຄື່ອງໝາຍ ............................................................ 37
7.2. ລາງວັນ ............................................................ 38
7.3. ຂັ້ນຕອນການຍັ້ງຢືນ ............................................................ 38
8. ຄູ່ມືມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ............................................................ 38

# ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

## 1. ຄຳນຳ

ຈຸດປະສົງຂອງມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ (ມທສອ) ແມ່ນເຄື່ອງມືສະໜອງໃຫ້ແກ່ບັນດາປະເທດສະມາຊິກອາຊຽນ ເພື່ອຊ່ວຍປັບປຸງຄຸນນະພາບການທ່ອງທ່ຽວຢູ່ບັນດາຕົວເມືອງພາຍໃນປະເທດຂອງຕົນໃຫ້ດີຂຶ້ນ, ບໍ່ພຽງແຕ່ເປັນການເພີ່ມຄວາມສາມາດໃນການແຂ່ງຂັນດ້ານການຕະຫຼາດ, ແຕ່ຍັງເປັນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍປະກອບສ່ວນຫຼຸດຜ່ອນຄວາມທຸກຍາກ. ນອກຈາກນັ້ນ, ມາດຕະຖານດັ່ງກ່າວນີ້ຍັງປະກອບສ່ວນຊ່ວຍຮັກສາສິ່ງແວດລ້ອມ, ປ້ອງກັນບໍ່ໃຫ້ມີຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ພັດທະນາບັນດາເມືອງຕ່າງໆໃນປະເທດສະມາຊິກອາຊຽນໃຫ້ມີຄວາມຍືນຍົງ. ສິ່ງສຳຄັນກໍຄື ການພົນຂະຫຍາຍແຜນຍຸດທະສາດການທ່ອງທ່ຽວອາຊຽນ 2011–2015 ທີ່ໄດ້ສະແດງໃຫ້ເຫັນເຖິງການເພີ່ມທະວີຂີດຄວາມສາມາດ ເພື່ອແກ້ໄຂບັນຫາການປ່ຽນແປງສະພາບດິນຟ້າອາກາດ ຊຶ່ງແມ່ນໜຶ່ງໃນບັນດາແຜນປະຕິບັດງານບູລິມະສິດເພື່ອບັນລຸແນວທາງຍຸດທະສາດ ແນ່ໃສ່ຍົກລະດັບຄຸນນະພາບການບໍລິການ ແລະ ສິ່ງອຳນວຍຄວາມສະດວກໃນພາກພື້ນ.

ມາດຕະຖານເຫຼົ່ານີ້ແມ່ນຂຶ້ນຢູ່ກັບບັນດາຕົວຊີ້ວັດຕ່າງໆ ທີ່ຈະປະເມີນບັນດາເມືອງທ່ອງທ່ຽວໃນປະເທດສະມາຊິກອາຊຽນ ໃນປັດຈຸບັນວ່າມີຄວາມຍືນຍົງຄືແນວໃດ, ຄຸນນະພາບການທ່ອງທ່ຽວທີ່ບັນດາເມືອງເຫຼົ່ານີ້ສະເໜີ ແລະ ລະບຸຂອບເຂດທີ່ຄວນຈະປັບປຸງ. ສິ່ງນີ້ຈະຊ່ວຍໃຫ້ບັນດາປະເທດສະມາຊິກອາຊຽນມີມາດຕະຖານທີ່ຕ້ອງການໃຫ້ບັນລຸຕາມເປົ້າໝາຍ ແລະ ຈະເປັນການສ້າງຄວາມເພິ່ງພໍໃຈໃຫ້ແກ່ນັກທ່ອງທ່ຽວ, ຈຳນວນນັກທ່ອງທ່ຽວເພີ່ມຫຼາຍຂຶ້ນ ແລະ ຊີວິດການເປັນຢູ່ຂອງປະຊາຊົນພາຍໃນປະເທດກໍດີຂຶ້ນ.

ພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ ຂໍສະແດງຄວາມຂອບໃຈຢ່າງຍິ່ງມາຍັງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວທີ່ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານເພື່ອແປມາດຕະຖານສະບັບນີ້. ຫວັງຢ່າງຍິ່ງວ່າມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ຈະເປັນທິດຊີ້ນຳແກ່ຜູ້ຈັດຕັ້ງປະຕິບັດຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ທັງເປັນເອກະສານຕົວຢ່າງທີ່ປະຊາຊົນທ້ອງຖິ່ນຈະຕ້ອງປະຕິບັດຕາມເພື່ອເຮັດໃຫ້ບັນດາເມືອງທ່ອງທ່ຽວຢູ່ໃນ ສປປ ລາວ ມີຄຸນະພາບດີຂຶ້ນເທື່ອລະກ້າວ ແລະ ໄດ້ຮັບລາງວັນມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນໃນຕໍ່ໜ້າ.

## 2. ພາກສະເໜີ

ການທ່ອງທ່ຽວໃນອາຊີຕາເວັນອອກສ່ຽງໃຕ້ໄດ້ມີການພັດທະນາຢ່າງວ່ອງໄວ ແລະ ຈະເຮັດໃຫ້ພາກພື້ນດັ່ງກ່າວກາຍເປັນໜຶ່ງໃນຈຸດໝາຍປາຍທາງການທ່ອງທ່ຽວທີ່ສຳຄັນຢູ່ໃນແຜນທີ່ທ່ອງທ່ຽວໂລກ. ການທ່ອງທ່ຽວແມ່ນໜຶ່ງໃນບັນດາຂະແໜງການຕ່າງໆທີ່ມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດແຫ່ງຊາດຂອງແຕ່ລະປະເທດ ແລະ ພາກພື້ນ.

ເວລາເວົ້າເຖິງການພັດທະນາເສດຖະກິດ, ການເຕີບໃຫຍ່ຂະຫຍາຍຕົວບໍ່ແມ່ນເປົ້າຫມາຍສູງສຸດ. ຈຸດປະສົງຕົ້ນຕໍບໍ່ຄວນເປັນການຂະຫຍາຍຕົວທາງເສດຖະກິດ, ແຕ່ຄວນການປັບປຸງຄຸນນະພາບການດຳລົງຊີວິດຢ່າງກ້ວາງຂວາງ. ເຖິງຢ່າງໃດກໍຕາມ, ການຂະຫຍາຍຕົວ ຍັງເປັນສິ່ງທີ່ບໍ່ທັນສົມບູນແບບໃນການວັດແທກຄວາມຄືບຫນ້າຂອງການປັບປຸງມາດຕະຖານການດຳລົງຊີວິດ. ເຖິງແມ່ນວ່າ ມັນຍັງບໍ່ສາມາດວັດແທກຄວາມສຳເລັດທາງດ້ານເສດຖະກິດໄດ້ຢ່າງພຽງພໍ, ແຕ່ມັນກໍເປັນສິ່ງຈຳເປັນ. ໃນທຸກສັງຄົມ, ການພັດທະນາເສດຖະກິດ ແລະ ສັງຄົມ ແມ່ນບໍ່ສາມາດປາດສະຈາກໄດ້ເຖິງການ ສ້າງວຽກເຮັດງານທຳ, ການສ້າງລາຍຮັບ ແລະ ຄວາມຮັ່ງມີ. ດັ່ງນັ້ນ, ການຂະຫຍາຍຕົວຕ້ອງສຸມໃສ່ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ. ຈຸດປະສົງທີ່ສຳຄັນທີ່ສຸດກໍຄືເຮັດໃຫ້ມີການເຕີບໂຕຫຼາຍທີ່ສຸດ. ຕົວຢ່າງ: ການຂະຫຍາຍຕົວທີ່ແຂງແຮງທີ່ມີຄວາມສົມດູນລະຫວ່າງຄວາມຍືດຍຸ່ນ ແລະ ຄວາມຫມັ້ນຄົງ ຫລາຍກວ່າການເສີມສ້າງຄວາມບໍ່ເທົ່າທຽມ. ຄຳວ່າ “**ສີຂຽວ**” ໝາຍເຖິງການຮັບປະກັນການພັດທະນາທີ່ເປັນມິດກັບສິ່ງແວດລ້ອມ ແລະ ມີຄວາມຢືນຍົງ. ດັ່ງນັ້ນ, ການເຕີບໂຕ **“ສີຂຽວ”** ຈຶ່ງຖືວ່າເປັນຮູບແບບໃໝ່ທີ່ເຮັດໃຫ້ເສດຖະກິດມີການຂະຫຍາຍໂຕໄວຂຶ້ນ, ຄອບຄຸມຫລາຍຂຶ້ນ, ມີຄວາມຍືດຍຸ່ນຫລາຍຂຶ້ນ ແລະ ເປັນມິດຕໍ່ສິ່ງແວດລ້ອມຫລາຍຂຶ້ນ. ການທ່ອງທ່ຽວຈຶ່ງມີບົດບາດສຳຄັນທີ່ຊ່ວຍໃຫ້ການຈະເລີນເຕີບໂຕດັ່ງກ່າວບັນລຸໄດ້ທັງປະລິມານ ແລະ ຄຸນນະພາບ.

ໃນປັດຈຸບັນມີຫຼາຍເມືອງໄດ້ຮັບການພັດທະນາເປັນຢ່າງດີຢູ່ທົ່ວພາກພື້ນ, ບາງຕົວເມືອງກໍຫາກໍກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ. ນີ້ເປັນໂອກາດອັນດີໃນການສົ່ງເສີມບັນດາເມືອງເຫຼົ່ານີ້ໃຫ້ມີການພັດທະນາເປັນປະຕູເຂົ້າທຳອິດ (gate way) ທີ່ຕ້ອນຮັບນັກທ່ອງທ່ຽວເຂົ້າສູ່ປະເທດ. ສິ່ງສຳຄັນໃນການພັດທະນາການທ່ອງທ່ຽວລະດັບຊາດ ແລະ ພາກພື້ນ ແມ່ນການຮັກສາ, ສ້າງພາບພົດ ແລະ ຊື່ສຽງທີ່ດີໃຫ້ແກ່ເມືອງຕ່າງໆ ເຊິ່ງເປັນ “ໃບຫນ້າ” ຂອງປະເທດ ແລະ ທີ່ມີແຫລ່ງທ່ອງທ່ຽວທາງວັດທະນະທຳ, ທຳມະຊາດ ແລະ ສິ່ງທີ່ມະນຸດສ້າງຂຶ້ນ.

ມັນມີຄວາມສຳຄັນທາງຍຸດທະສາດສຳລັບບັນດາຕົວເມືອງ ໃນການພະຍາຍາມພັດທະນາພື້ນທີ່ຕ່າງໆໃຫ້ມີຄວາມສວຍງາມ, ປັບປຸງສະພາບແວດລ້ອມ ແລະ ສຸຂະອະນາໄມ, ປັບປຸງພື້ນທີ່ໃນຕົວເມືອງ ແລະ ສິ່ງເສີມສະຖານທີ່ທ່ອງທ່ຽວຕ່າງໆທີ່ມີພາຍໃນຕົວເມືອງ. ແນ່ນອນວ່າ, ການບໍລິການ ແລະ ການຕ້ອນຮັບນັກທ່ອງທ່ຽວໃນເຂດຕົວເມືອງແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກສະຖານທີ່ທ່ອງທ່ຽວຫຼາຍແຫ່ງແມ່ນຕັ້ງຢູ່ໃນ ແລະ ໃກ້ກັບຕົວເມືອງ. ບັນດາພາກສ່ວນທີ່ກ່ຽວຂ້ອງພາຍໃນທ້ອງຖິ່ນ ຕ້ອງຄຳນຶງເຖິງສະພາບແວດລ້ອມ ແລະ ຄຸນນະພາບການດຳລົງຊີວິດຢູ່ພາຍໃນຕົວເມືອງຢ່າງຈິງຈັງ ຖ້າຕ້ອງການໃຫ້ບໍລິການ ແລະ ຕອບສະໜອງຕາມຄວາມຕ້ອງການຂອງນັກທ່ອງທ່ຽວ. ດັ່ງນັ້ນ, ການນຳສະເໜີ ແລະ ສ້າງມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ຈຶ່ງເປັນສິ່ງທີ່ຈຳເປັນ ເພື່ອເຮັດໃຫ້ບັນດາປະເທດສະມາຊິກອາຊຽນ ມີມາດຕະຖານທີ່ຕ້ອງການບັນລຸດຽວກັນ ເພື່ອສ້າງຄວາມເພິ່ງພໍໃຈໃຫ້ແກ່ນັກທ່ອງທ່ຽວ, ເພີ່ມຈຳນວນນັກທ່ອງທ່ຽວ ແລະ ປັບປຸງຄຸນນະພາບຊີວິດໃຫ້ແກ່ຄົນທ້ອງຖິ່ນ.

# 3. ຂອບເຂດ

ມາດຕະຖານດັ່ງກ່າວນີ້ແນ່ໃສ່ບັນດາເມືອງທີ່ມີນັກທ່ອງທ່ຽວຫຼາຍ ແລະ ມີສະຖານທີ່ທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ. ບັນດາຕົວຊີ້ວັດທີ່ຖືກນຳໃຊ້ໃນການປະເມີນມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ແມ່ນອີງໃສ່ບັນດາຕົວຊີ້ວັດ ລຸ່ມນີ້:

- ການຄຸ້ມຄອງສິ່ງແວດລ້ອມ
- ຄວາມສະອາດ
- ການຈັດການສິ່ງເສດເຫຼືອ
- ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ
- ພື້ນທີ່ສີຂຽວ
- ຄວາມປອດໄພດ້ານສຸຂະພາບ, ຄວາມປອດໄພ ແລະ ການຮັກສາຄວາມສະຫງົບໃນຕົວເມືອງ
- ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ

ອາຊຽນປະກອບມີ 10 ປະເທດ ທີ່ມີລະດັບການພັດທະນາດ້ານການທ່ອງທ່ຽວທີ່ແຕກຕ່າງກັນ, ມີຈຳນວນ ແລະ ປະເພດນັກທ່ອງທ່ຽວ, ເສດຖະກິດ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມຈາກການທ່ອງທ່ຽວ, ລະບົບການເມືອງ ແລະ ອົງການຈັດຕັ້ງທີ່ແຕກຕ່າງກັນ ຊຶ່ງມີນະໂຍບາຍ, ຂໍ້ກຳນົດ ແລະ ກົດລະບຽບສະເພາະຂອງແຕ່ລະປະເທດ. ດັ່ງນັ້ນ, ເພື່ອເຮັດໃຫ້ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນປະສົບຜົນສຳເລັດ ແລະ ສອດຄ່ອງກັບແຕ່ລະປະເທດ, ບັນດາຕົວຊີ້ວັດທີ່ກຳນົດໄວ້ໃນມາດຕະຖານສະບັບນີ້ຕ້ອງ:

- ນຳໃຊ້ໄດ້ກັບທຸກປະເທດສະມາຊິກອາຊຽນ
- ໄດ້ຮັບການເຫັນດີຈາກບັນດາປະເທດສະມາຊິກດ້ວຍສຽງສ່ວນຫຼາຍ
- ສາມາດດັດປັບໄດ້
- ສະດວກໃນການປະເມີນ, ຕິດຕາມ ແລະ ກວດກາ

ເນື່ອງຈາກວ່າມາດຖານດັ່ງກ່າວສາມາດດັດປັບໄດ້, ດັ່ງນັ້ນມາດຕະຖານນີ້ຈະໄດ້ຮັບການປັບປຸງ ແລະ ທົບທວນຄືນທຸກໆ 3 ປີ (ຖ້າຈຳເປັນ)

# 4. ຄຳສັບ ແລະ ຄວາມໝາຍ

ຄຳສັບ ແລະ ຄວາມໝາຍ ຢູ່ໃນມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ມີຄືດັ່ງລຸ່ມນີ້:

## 4.1. ຄວາມສະອາດ

ໝາຍເຖິງສິ່ງແວດລ້ອມຢູ່ຕາມສະຖານທີ່ທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ, ສະຖານທີ່ສາທາລະນະ ແລະ ອື່ນໆ ລວມທັງຄຸນນະພາບອາກາດ, ນ້ຳດື່ມ, ລະບົບຈັດເກັບ ແລະ ຄຸ້ມຄອງສິ່ງເສດເຫຼືອ.

## 4.2. ເຂດຈ່າຍຄ່າທຳນຽມຄວາມແອອັດ

ໝາຍເຖິງເຂດທີ່ມີການສັນຈອນ ຫຼື ຄົນແອອັດຫຼາຍ, ເຮັດໃຫ້ມີການເຄື່ອນໄຫວຊ້າ ຫຼື ຫຍຸ້ງຍາກ. ພາຫານະ

ທີ່ເຂົ້າໄປຊົງເຂດດັ່ງກ່າວຕ້ອງໄດ້ຈ່າຍເງິນ.

**4.3. ພາຫານະທີ່ເປັນມິດກັບສິ່ງແວດລ້ອມ**

ໝາຍເຖິງພາຫານະທີ່ມີຜົນກະທົບທີ່ເປັນອັນຕະຫຼາຍຕໍ່ສິ່ງແວດລ້ອມໜ້ອຍກ່ວາພາຫານະທີ່ມີເຄື່ອງຈັກຊະນິດອື່ນໆ ທີ່ໃຊ້ນໍ້າມັນແອັດຊັງ ຫຼື ກາຊວນ ຫຼື ໃຊ້ນໍ້າມັນຊະນິດອື່ນໆ. ພາຫານະປະເພດນີ້ອອກແບບມາສະເພາະເພື່ອຫຼຸດຜ່ອນອັນຕະລາຍຕໍ່ສະພາບແວດລ້ອມທາງທໍາມະຊາດໃຫ້ໜ້ອຍທີ່ສຸດ.

**4.4. ລະບຽບການດ້ານສິ່ງແວດລ້ອມ**

ໝາຍເຖິງຂໍ້ກໍານົດ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການຄວບຄຸມຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປົກປັກຮັກສາສິ່ງແວດລ້ອມ ເຊັ່ນ: ມົນລະພິດທາງອາກາດ, ມົນລະພິດທາງນໍ້າ, ມົນລະພິດທາງສຽງ, ການຄວບຄຸມ ແລະ ການເກັບມ້ຽນຂີ້ເຫຍື້ອ...

**4.5. ພື້ນທີ່ສີຂຽວ**

ໝາຍເຖິງສະຖານທີ່ຕ່າງໆໃນເຂດຕົວເມືອງທີ່ທຸກຄົນສາມາດເຂົ້າທ່ຽວຊົມໄດ້ ຊຶ່ງປະດັບປະດາດ້ວຍດອກໄມ້, ຕົ້ນໄມ້ ຫຼື ຫຍ້າ...

**4.6. ສູນປິ່ນປົວສຸຂະພາບ**

ໝາຍເຖິງສະຖານທີ່ທີ່ມີການບໍລິການດ້ານວຽກງານສາທາລະນະສຸກ, ເປັນບ່ອນປິ່ນປົວ ແລະ ໃຫ້ການບໍລິການຮັກສາສຸຂະພາບ.

**4.7. ການເຄື່ອນໄຫວທີ່ຜິດກົດໝາຍ**

ໝາຍເຖິງການເຄື່ອນໄຫວວຽກງານຕ່າງໆທີ່ຜິດກົດໝາຍ ເຊັ່ນ: ອາຊະຍາກໍາ, ການຄ້າຢາເສບຕິດ, ການທໍາລາຍຊັບພະຍາກອນທໍາມະຊາດ, ວັດທະນະທໍາ ແລະ ອື່ນໆ.

**4.8. ກົດເກນ (Norms)**

ໝາຍເຖິງຫຼັກການທີ່ຄວບຄຸມດ້ານພຶດຕິກໍາ ແລະ ຖືກບັງຄັບໃຊ້ຢູ່ໃນສັງຄົມຢ່າງເໝາະສົມ ຊຶ່ງໝາຍຄວາມວ່າມີກົດໝາຍບັງຄັບໃຊ້.

**4.9. ລາຍການທ່ອງທ່ຽວ**

ໝາຍເຖິງແຜນການທີ່ບໍລິສັດທ່ອງທ່ຽວກໍານົດຂຶ້ນ ຊຶ່ງສະແດງເຖິງທີ່ຕັ້ງຂອງສະຖານທີ່ທ່ອງທ່ຽວ, ກິດຈະກໍາການທ່ອງທ່ຽວ ແລະ ອື່ນໆ.

**4.10. ມົນລະພິດ (ທາງນໍ້າ, ທາງອາກາດ, ທາງສຽງ)**

ໝາຍເຖິງທຸກໆກິດຈະກໍາຂອງປະຊາຊົນ, ນັກທ່ອງທ່ຽວ, ຫົວໜ່ວຍທຸລະກິດ ແລະ ພາກສ່ວນອື່ນໆທີ່ເກີນຄ່າມາດຕະຖານຕາມທີ່ໄດ້ກໍານົດໄວ້ໃນມາດຕະຖານແຫ່ງຊາດທາງດ້ານຄຸນນະພາບນໍ້າ, ອາກາດ ແລະ ສຽງ.

**4.11. ພື້ນທີ່ສາທາລະນະ**

ໝາຍເຖິງສະຖານທີ່ສາທາລະນະທີ່ປະຊາຊົນ ແລະ ນັກທ່ອງທ່ຽວຫຼາຍ ລວມມີສໍານັກງານ, ອົງການທີ່ໃຫ້

ບໍລິການປະຊາຊົນ ແລະ ອຸປະກອນຢູ່ຕາມສະຖານທີ່ສາທາລະນະ ເຊັ່ນ: ຕັ່ງ, ການຂົນສົ່ງສາທາລະນະ ແລະ ອື່ນໆ.

### 4.12. ການປູກຈິດສຳນຶກ

ໝາຍເຖິງການເຄື່ອນໄຫວວຽກງານຕ່າງໆທີ່ມີ 3 ອົງປະກອບຫຼັກ ເຊັ່ນ: ຈຸດປະສົງໃນການປູກຈິດສຳນຶກ, ເປົ້າໝາຍໃນການຈັດຕັ້ງປະຕິບັດ ແລະ ເອກະສານທີ່ຊ່ວຍສະໜອງດ້ານຂໍ້ມູນ-ຂ່າວສານ. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ ໝາຍເຖິງການເຮັດໃຫ້ຄົນພາຍໃນປະເທດ, ນັກທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມເຂົ້າໃຈກ່ຽວກັບຜົນປະໂຫຍດດ້ານຄວາມສະອາດ, ສຸຂະອານາໄມ, ສຸຂະພິບານ ແລະ ສະພາບແວດລ້ອມທີ່ດີ.

### 4.13. ການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່

ໝາຍເຖິງຂະບວນການນຳເອົາເຄື່ອງຂອງທີ່ໃຊ້ແລ້ວ (ສິ່ງເສດເຫຼືອ) ມາໃຊ້ຄືນເປັນຜະລິດຕະພັນໃໝ່ເພື່ອເຮັດໃຫ້ສິ່ງເສດເຫຼືອກາຍເປັນປະໂຫຍດ, ຫຼຸດຜ່ອນການນຳໃຊ້ພະລັງງານ, ຫຼຸດຜ່ອນມົນລະພິດທາງອາກາດ (ຈາກການຈູດ/ເຜົາ) ແລະ ມົນລະພິດທາງນ້ຳ (ຈາກການຝັງ/ຖົມ) ໂດຍມີການຫຼຸດຜ່ອນການຖິ້ມຂີ້ເຫຍື້ອຊະຊາຍ ແລະ ຫຼຸດຜ່ອນການປ່ອຍອາຍແກັສເຮືອນແກ້ວ.

### 4.14. ພະລັງງານທົດແທນ

ໝາຍເຖິງພະລັງງານທຸກຊະນິດທີ່ໄດ້ຈາກແຫລ່ງພະລັງງານທີ່ເກີດຈາກທຳມະຊາດ ເຊັ່ນ: ແສງແດດ, ລົມ, ຄື້ນທະເລ ຫຼື ແຫລ່ງທົດແທນອື່ນໆ ທີ່ບໍ່ແມ່ນພະລັງງານຈາກນ້ຳມັນ.

### 4.15. ການບໍລິຫານຄວາມສ່ຽງ

ໝາຍເຖິງກົນໄກທີ່ອົງກອນສ້າງຂຶ້ນມາ ແລະ ມາດຕະການໃນການປ້ອງກັນ ແລະ ຮັບມືກັບຄວາມສ່ຽງ ແລະ ໄພພິບັດທີ່ບໍ່ຄາດຄິດ.

### 4.16. ເມືອງທ່ອງທ່ຽວ

ໝາຍເຖິງບັນດາເມືອງຕ່າງໆທີ່ມີນັກທ່ອງທ່ຽວທ່ຽວຫຼາຍ ແລະ ມີສະຖານທີ່ທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ.

### 4.17. ໂຄງລ່າງພື້ນຖານການທ່ອງທ່ຽວ

ໝາຍເຖິງການບໍລິການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆເພື່ອອຳນວຍຄວາມສະດວກ ແລະ ເຮັດໃຫ້ການເດີນທາງ ແລະ ການທ່ອງທ່ຽວໃນເມືອງນັ້ນສະດວກສະບາຍຂຶ້ນ ລວມມີໂຄງລ່າງພື້ນຖານທົ່ວໄປ ເຊັ່ນ: ສູນຂໍ້ມູນ, ປ້າຍຊີ້ບອກ ແລະ ອື່ນໆ.

### 4.18. ຕຳຫຼວດທ່ອງທ່ຽວ

ໝາຍເຖິງເຈົ້າໜ້າທີ່ທີ່ໄດ້ຮັບການຝຶກອົບຮົມສະເພາະ ເພື່ອຮັບມື ແລະ ແກ້ໄຂກັບບັນຫາຕ່າງໆໃຫ້ແກ່ນັກ

ທ່ອງທ່ຽວຢູ່ໃນເມືອງນັ້ນ.

### 4.19. ຜັງເມືອງ

ໝາຍເຖິງແຜນຜັງທີ່ຖືກອອກແບບໂດຍອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນດ້ານການພັດທະນາຕົວເມືອງມີຄວາມຍືນຍົງ ເຊັ່ນ: ແຜນນຳໃຊ້ທີ່ດິນ, ການແບ່ງເຂດ, ການວາງແຜນດ້ານສິ່ງແວດລ້ອມ ແລະ ການຄົມມະນາຄົມຂົນສົ່ງ.

### 4.20. ການຈັດການສິ່ງເສດເຫຼືອ

ໝາຍເຖິງມາດຕະການທີ່ອົງການປົກຄອງທ້ອງຖິ່ນກຳນົດຂຶ້ນເພື່ອເກັບມ້ຽນ, ຈັດແບ່ງປະເພດນ້ຳເປື້ອນ ແລະ ຂີ້ເຫຍື້ອ ດ້ວຍວິທີທີ່ມີປະສິດທິພາບ ແລະ ເໝາະສົມ.

## 5. ບັນດາຕົວຊີ້ວັດ

### 5.1. ຕົວຊີ້ວັດການຄຸ້ມຄອງສິ່ງແວດລ້ອມ

ການຄຸ້ມຄອງສິ່ງແວດລ້ອມໝາຍເຖິງວິທີການຕ່າງໆ ທີ່ຄຳນຶງເຖິງຜົນກະທົບຕໍ່ສິ່ງແວດລ້ອມທີ່ເກີດຈາກບັນດາວຽກງານພັດທະນາຕ່າງໆຂອງປະເທດນັ້ນ, ເມືອງນັ້ນ ຫຼື ໂຄງການພັດທະນາຕ່າງໆທີ່ຈະເກີດຂຶ້ນ.

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງແຕ່ລະວຽກງານແມ່ນມີຫຼາຍລະດັບ ແລະ ຫຼາຍວິທີທີ່ແຕກຕ່າງກັນ. ໃນຂະນະດຽວກັນ ບັນດາວຽກງານທີ່ພວກເຮົາສາມາດຈັດຕັ້ງປະຕິບັດໄດ້ເພື່ອຮັບມືກັບບັນຫາຕ່າງໆ ເຊັ່ນ: ການປູກຈິດສຳນຶກ, ຂໍ້ຫ້າມ ຫຼື ສິ່ງຕ້ອງຫ້າມຕ່າງໆ, ແຜນພັດທະນາຕົວເມືອງ ແລະ ອື່ນໆ.

ຕົວຊີ້ວັດນີ້ແມ່ນອົງປະກອບທີ່ສຳຄັນທີ່ສຸດ ດັ່ງທີ່ພວກເຮົາເຄີຍເຫັນຢູ່ເກືອບທຸກນະໂຍບາຍທີ່ກ່ຽວຂ້ອງກັບການປັບປຸງ ແລະ ຍົກລະດັບຄຸນນະພາບການດຳລົງຊີວິດຂອງປະຊາຊົນໃຫ້ດີຂຶ້ນ. ທີ່ແນ່ນອນຄື ພວກເຮົາສາມາດສັງເກດເຫັນໄດ້ວ່າຕົວຊີ້ວັດພື້ນຖານທີ່ລວບລວມເອົາບັນດາອົງປະກອບທັງໝົດ ເຊັ່ນ: ການວັດແທກສະພາບແວດລ້ອມຕາມສະພາບການດຳລົງຊີວິດໃນປັດຈຸບັນ ໂດຍເນັ້ນໃສ່ອົງປະກອບຫຼັກດ້ານວຽກງານສາທາລະນະສຸກ, ຄຸນນະພາບອາກາດ, ນ້ຳໃຊ້ທົ່ວໄປ, ນ້ຳດື່ມບໍລິສຸດ ແລະ ອື່ນໆ. ດັ່ງນັ້ນ, ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ແມ່ນແນ່ໃສ່ເພື່ອສົ່ງເສີມ ແລະ ກະຕຸກຊຸກຍູ້ບັນດາເມືອງຕ່າງໆ ເຜີຍແຜ່ໃຫ້ປະຊາຊົນ ແລະ ນັກທ່ອງທ່ຽວທີ່ໄປທ່ຽວເມືອງເຫຼົ່ານັ້ນຮັບຮູ້, ເຂົ້າໃຈກ່ຽວກັບສະພາບແວດລ້ອມບ່ອນທີ່ເຂົາເຈົ້າພັກເຊົາຢູ່ ແລະ ບ່ອນທີ່ເຂົາເຈົ້າໄປຢ້ຽມຢາມ.

ນອກຈາກນັ້ນ, ລາຍລະອຽດຂອງຕົວຊີ້ວັດນີ້ ຍັງແນ່ໃສ່ເພື່ອກະຕຸກຊຸກຍູ້ໃຫ້ທຸກເມືອງທີ່ມີເງື່ອນໄຂສະໝັກໃຫ້ເລີ່ມປະຕິບັດວຽກງານ ເພື່ອປ້ອງກັນບໍ່ໃຫ້ມີຜົນກະທົບດ້ານລົບຕໍ່ການດຳລົງຊີວິດ ແລະ ຊຸກຍູ້ໃຫ້ມີການຈັດຕັ້ງປະຕິບັດແຜນພັດທະນາຕົວເມືອງ ເພື່ອຮັບປະກັນຜົນກະທົບດ້ານບວກ ແລະ ລົບ ຊຶ່ງອາດຈະເກີດຈາກບັນດາວຽກງານພັດທະນາຕົວເມືອງ. ນອກຈາກນັ້ນ, ຕົວຊີ້ວັດດັ່ງກ່າວນີ້ຍັງປູກຈິດສຳນຶກໃຫ້ບັນດາເມືອງຕ່າງໆກ່ຽວກັບການນຳໃຊ້ພະລັງງານທົດແທນອີກດ້ວຍ.

### 5.1.1. ຜັງເມືອງ

ໝາຍເຖິງການວາງແຜນການນຳໃຊ້ ແລະ ຈັດສັນທີ່ດິນ, ການແບ່ງເຂດ, ການວາງແຜນດ້ານສິ່ງແວດລ້ອມ ແລະ ການວາງແຜນການຄົມມະນາຄົມຂົນສົ່ງທີ່ອອກແບບໂດຍອີງການປົກຄອງທ້ອງຖິ່ນ ເພື່ອຮັບປະກັບການຂະຫຍາຍຕົວເມືອງໃຫ້ມີຄວາມຍືນຍົງ.

### 5.1.2. ລະບຽບການດ້ານສິ່ງແວດລ້ອມ

ຕົວຊີ້ວັດດັ່ງກ່າວສາມາດວັດແທກໄດ້ວ່າ ຂໍ້ກຳນົດ ແລະ ລະບຽບການດ້ານສິ່ງແວດລ້ອມສາມາດຄວບຄຸມການດຳເນີນງານຂອງບັນດາຫົວໜ່ວຍທຸລະກິດທ່ອງທ່ຽວໃນປັດຈຸບັນໄດ້ ຫຼື ບໍ່ ແລະ ລະບຽບເຫຼົ່ານີ້ຖືກບັງຄັບໃຊ້ຈາກອີງການປົກຄອງທ້ອງຖິ່ນ ຫຼື ບໍ່ ເຊັ່ນ: ລະບຽບກ່ຽວກັບການວາງແຜນ, ລະບຽບກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ ແລະ ອື່ນໆ.

### 5.1.3. ມົນລະພິດ (ທາງນໍ້າ, ທາງອາກາດ ແລະ ທາງສຽງ)

ຕົວຊີ້ວັດນີ້ປະເມີນລະດັບມົນລະພິດທາງນໍ້າວ່າ ໄດ້ຕາມມາດຕະຖານທີ່ທາງການໄດ້ກຳນົດໄວ້ ຫຼື ບໍ່. ສິ່ງນີ້ອາດໝາຍເຖິງບັນດາແມ່ນໍ້າຕ່າງໆ ເຊັ່ນ: ຢູ່ໃນສຽມຣຽບ ຫຼື ພະນົມເປັນໃນປະເທດກຳປູເຈຍ, ນໍ້າທະເລລຽບຕາມບໍລິເວນແຄມຝັ່ງ ເຊັ່ນ: ກຳປົງສົມ ແລະ ເກບ ໃນປະເທດກຳປູເຈຍ ເຊັ່ນດຽວກັນກັບນໍ້າດື່ມທີ່ມີມາດຕະຖານວັດແທກຄຸນນະພາບນໍ້າ.

ນອກຈາກນີ້, ຍັງປະເມີນຄຸນນະພາບອາກາດຢູ່ໃນເມືອງ ແລະ ມາດຕະການ ທີ່ຈະປັບປຸງຄຸນນະພາບອາກາດ ເຊັ່ນ: ຄວາມສາມາດໃນການຫຼຸດຜ່ອນການສັນຈອນແອອັດ, ການນຳໃຊ້ນໍ້າມັນ, ລະດັບມົນລະພິດທາງສຽງ ແລະ ລະບຽບທີ່ມີຢູ່ນັ້ນສາມາດບັງຄັບໃຊ້ໃນການຄວບຄຸມສຽງໄດ້ຕາມມາດຕະຖານທີ່ກຳນົດໄວ້ ຫຼື ບໍ່.

### 5.1.4. ການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມ

ໝາຍເຖິງການຂົນສົ່ງຢູ່ໃນຕົວເມືອງ (ພາກລັດ ແລະ ທຸລະກິດ) ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ໂດຍມີການສົ່ງເສີມໃຫ້ນຳໃຊ້ພາຫານະທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ລົດເມທີ່ມີລະບົບຄວບຄຸມມົນລະພິດ, ລົດໄຟຟ້າ ແລະ ເຂດຈ່າຍຄ່າທຳນຽມການສັນຈອນແອອັດ.

### 5.1.5. ການນຳໃຊ້ພະລັງງານແບບຍືນຍົງ

ໝາຍເຖິງການປະຫຍັດພະລັງງານ ແລະ ນຳໃຊ້ອຸປະກອນທີ່ມີປະສິດທິພາບຢູ່ໃນຫົວໜ່ວຍທຸລະກິດທີ່ຕິດພັນກັບການທ່ອງທ່ຽວ ເຊັ່ນ: ດອກໄຟປະຫຍັດ, ປຸ່ມເປີດ-ປິດ, ການນຳໃຊ້ກຸນແຈຊະນິດບັດ ແລະ ອື່ນໆ. ການນຳໃຊ້ພະລັງງານທົດແທນ ເຊັ່ນ: ພະລັງງານແສງຕາເວັນ, ພະລັງງານລົມ ແລະ ອື່ນໆ. ການຕື່ນຕົວ ແລະ ພັນທະຂອງບໍລິສັດທ່ອງທ່ຽວກ່ຽວກັບການປະຫຍັດພະລັງງານ.

## 5.2. ຕົວຊີ້ວັດຄວາມສະອາດ

ສະຖານທີ່ສາທາລະນະໝາຍເຖິງສະຖານທີ່ທີ່ມີຄົນຈຳນວນຫຼາຍທີ່ມີການພົວພັນເຊິ່ງກັນ ແລະ ກັນ. ຄວາມສະອາດຢູ່ຕາມສະຖານທີ່ສາທາລະນະແມ່ນຂຶ້ນຢູ່ກັບພຶດຕິກຳຂອງແຕ່ລະຄົນ ແລະ ການເອົາໃຈໃສ່ໃນການຮັກສາສະຖານທີ່ແຫ່ງນັ້ນ. ຄຽງຄູ່ກັນນັ້ນ ຄວາມສະອາດຕາມສະຖານທີ່ສາທາລະນະຍັງເປັນປັດໄຈສຳຄັນທີ່ສົ່ງຜົນກະທົບຕໍ່ການເປັນຢູ່ຂອງໝົດທຸກຄົນ. ໃນຄວາມເປັນຈິງແລ້ວ, ຄວາມສະອາດຕາມສະຖານທີ່ສາທາລະນະນັ້ນຍັງສາມາດຊ່ວຍຍົກລະດັບຄຸນນະພາບການດຳລົງຊີວິດ ແລະ ຄວາມສວຍງາມຂອງຕົວເມືອງອີກດ້ວຍ ຊຶ່ງນັກທ່ອງທ່ຽວກໍຕ້ອງໄດ້ມີສ່ວນຮ່ວມໃນການຮັກສາຄວາມສະອາດເຊັ່ນດຽວກັນ.

ຕົວຊີ້ວັດນີ້, ພວກເຮົາຕ້ອງຄຳນຶງເຖິງຄວາມສະອາດຕາມສະຖານທີ່ສາທາລະນະ ເຊັ່ນ: ບັນດາອາຄານສາທາລະນະ, ສູນຂໍ້ມູນ-ຂ່າວສານ, ພື້ນທີ່ສີຂຽວ, ສູນການຄ້າ, ຣີສອດ ແລະ ສວນສາທາລະນະ, ຖະໜົນສາຍຫຼັກ, ຫ້ອງນ້ຳສາທາລະນະ ແລະ ບ່ອນອື່ນໆ.

ຕົວຊີ້ວັດນີ້ເນັ້ນໃສ່ຕາມຄວາມເປັນຈິງຂອງສະຖານທີ່ສາທາລະນະຂອງບັນດາເມືອງຕ່າງໆ ແລະ ຂໍ້ຈຳກັດໃນການຮັກສາຄວາມສະອາດຂອງອຳນາດການປົກຄອງທ້ອງຖິ່ນ. ໂດຍທົ່ວໄປແລ້ວ, ຄວາມສະອາດຂອງສະຖານທີ່ຕ່າງໆຢູ່ໃນຕົວເມືອງແມ່ນຈະດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ ແລະ ປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດຕົວເມືອງ. ນອກຈາກນັ້ນ, ກໍຍັງເປັນເງື່ອນໄຂທີ່ສ້າງຊື່ສຽງໃຫ້ແຕ່ລະເມືອງອີກດ້ວຍ.

### 5.2.1. ຄວາມສະອາດຂອງສະຖານທີ່ສາທາລະນະ

ແມ່ນຕົວຊີ້ວັດທີ່ສຳຄັນໃນການສະໜອງຂໍ້ມູນທີ່ດີໃຫ້ແກ່ນັກທ່ອງທ່ຽວ, ປະຊາຊົນໃນທ້ອງຖິ່ນ ແລະ ພາກທຸລະກິດ. ຄວາມສະອາດຂອງສະຖານທີ່ ແລະ ອາຄານສາທາລະນະ, ພື້ນທີ່ສີຂຽວ, ຕະຫຼາດ, ສະຖານີລົດໂດຍສານ, ສູນຂໍ້ມູນ-ຂ່າວສານ ແລະ ສະຖານທີ່ອື່ນໆ ຄວນໄດ້ຮັບການປະເມີນຈາກອຳນາດການປົກຄອງທ້ອງຖິ່ນ ແລະ ມີການປະກາດໃຊ້ກົດລະບຽບ ລວມທັງສະໜອງອຸປະກອນທີ່ເໝາະສົມ ເຊັ່ນ: ຈຳນວນຖັງຂີ້ເຫຍື້ອຢູ່ຕາມເຂດສາທາລະນະຄວນໄດ້ຮັບການປະເມີນ ແລະ ເອົາໃຈໃສ່ບົວລະບັດຮັກສາເປັນຢ່າງດີ.

### 5.2.2. ຄວາມສະອາດຂອງຫ້ອງນ້ຳສາທາລະນະ

ຕົວຊີ້ວັດນີ້ໝາຍເຖິງຈຳນວນຫ້ອງນ້ຳສາທາລະນະທີ່ຢູ່ຕາມສະຖານທີ່ທ່ອງທ່ຽວໃນເມືອງນັ້ນ, ການເອົາໃຈໃສ່ໃນການອານາໄມ ແລະ ບົວລະບັດຮັກສາ. ຕົວຊີ້ວັດນີ້ແມ່ນຢູ່ໃນມາດຕະຖານຫ້ອງນ້ຳສາທາລະນະສະອາດອາຊຽນ.

### 5.2.3. ຄວາມສະອາດຂອງສະຖານທີ່ທ່ອງທ່ຽວ (ຫໍພິພິທະພັນ, ວັດວາອາຮາມ, ສວນສາທາລະນະ, ຫາດຊາຍ ແລະ ອື່ນໆ)

ຕົວຊີ້ວັດນີ້ປະເມີນວ່າມີຖັງຂີ້ເຫຍື້ອຢູ່ຕາມສະຖານທີ່ທ່ອງທ່ຽວພຽງພໍ ຫຼື ບໍ່, ຄວາມຖີ່ໃນການເກັບຂີ້ເຫຍື້ອ, ຄວາມສະອາດ ແລະ ການບົວລະບັດຮັກສາບໍລິເວນສະຖານທີ່ທ່ອງທ່ຽວນັ້ນ. ຖ້າຫາກບໍ່ປະຕິບັດຕາມລະບຽບເຫຼົ່ານີ້ກໍຈະມີການລົງໂທດ.

#### 5.2.4. ຄວາມສະອາດຕາມຖະໜົນສາຍຫຼັກ

ປະເມີນສະພາບຕາມບັນດາຖະໜົນສາຍຫຼັກພາຍໃນເມືອງ ແລະ ຈາກເມືອງໜຶ່ງໄປຫາເມືອງໜຶ່ງວ່າ ບັນດາເມືອງເຫຼົ່ານີ້ໄດ້ຮັບການທຳຄວາມສະອາດເປັນປະຈຳ ຫຼື ບໍ່ ແລະ ມີອຸປະກອນທີ່ເໝາະສົມ ຫຼື ບໍ່ ເຊັ່ນ: ຖັງຂີ້ເຫຍື້ອຢູ່ແຕ່ລະຈຸດ.

### 5.3. ການຈັດການສິ່ງເສດເຫຼືອ

ການຈັດການສິ່ງເສດເຫຼືອໝາຍເຖິງການເກັບມ້ຽນຢ່າງຖືກວິທີ (ການນຳເອົາຂີ້ເຫຍື້ອ, ນ້ຳເປື້ອນມາໝູນໃຊ້ຄືນ ແລະ ເອົາຖິ້ມຈຳນວນທີ່ໃຊ້ຄືນບໍ່ໄດ້). ຂີ້ເຫຍື້ອ ແລະ ນ້ຳເປື້ອນເກີດມາຈາກການເຄື່ອນໄຫວວຽກງານຕ່າງໆຂອງຄົນເຮົາໃນແຕ່ລະວັນ. ການຈັດການຂີ້ເຫຍື້ອແມ່ນຈຸດປະສົງຕົ້ນຕໍໃນການປະກອບສ່ວນຫຼຸດຜ່ອນຜົນກະທົບດ້ານລົບຕໍ່ສຸຂະພາບຂອງຄົນເຮົາ, ສິ່ງແວດລ້ອມ ແລະ ຄວາມງາມຂອງຕົວເມືອງໂດຍລວມ.

ຕັ້ງແຕ່ກາງສັດຕະວັດທີ 20 ເປັນຕົ້ນມາ, ປະລິມານຂີ້ເຫຍື້ອຢູ່ທົ່ວໂລກມີຈຳນວນເພີ່ມຂຶ້ນຢ່າງຫຼວງຫຼາຍ (ໄປຄຽງຄູ່ກັບການຂະຫຍາຍຕົວທາງດ້ານອຸດສາຫະກຳ). ຜົນກະທົບດ້ານລົບຂອງຂີ້ເຫຍື້ອຈາກອຸດສາຫະກຳແມ່ນມີຢູ່ທົ່ວໂລກ. ເຖິງແມ່ນວ່າລະບົບບຳບັດ, ການກຳຈັດຂີ້ເຫຍື້ອ, ນ້ຳເປື້ອນຢູ່ໃນລະດັບໂລກ ແລະ ລະດັບຊາດຍັງພົບກັບສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼາຍຢ່າງກໍຕາມ, ບັນດາເມືອງຕ່າງໆຈະຕ້ອງໄດ້ຈັດຕັ້ງປະຕິບັດໂດຍນຳໃຊ້ລະບົບທີ່ລຽບງ່າຍ.

ມາດຕະຖານດັ່ງກ່າວຮຽກຮ້ອງໃຫ້ບັນດາເມືອງຕ່າງໆ ຕ້ອງປະຕິບັດແຜນການຈັດການສິ່ງເສດເຫຼືອໃຫ້ມີປະສິດທິພາບ ລວມທັງມີວິທີການເກັບ ແລະ ບຳບັດນ້ຳເປື້ອນ ແລະ ຂີ້ເຫຍື້ອ ພ້ອມກັບໂຄສະນາປູກຈິດສຳນຶກໃຫ້ທຸກພາກສ່ວນໄດ້ຮັບຮູ້ກ່ຽວກັບບັນຫານີ້.

#### 5.3.1. ການຈັດການນ້ຳເປື້ອນ

ຕົວຊີ້ວັດການຈັດການນ້ຳເປື້ອນນີ້ແມ່ນປະເມີນຈາກໜ່ວຍງານຂອງພາກລັດ ທີ່ຮັບຜິດຊອບກ່ຽວກັບການຈັດການນ້ຳເປື້ອນ ແລະ ປະເມີນອັດຕາສ່ວນຂອງພົນລະເມືອງທີ່ມີສ່ວນກ່ຽວຂ້ອງໃນການປ່ອຍນ້ຳເປື້ອນ ຖ້າບໍ່ມີໜ່ວຍງານຮັບຜິດຊອບ ກໍໃຫ້ປະເມີນວິທີ ແລະ ຄວາມຖີ່ໃນການເກັບນ້ຳເປື້ອນ.

#### 5.3.2. ການຈັດການຂີ້ເຫຍື້ອ

ຕົວຊີ້ວັດນີ້ປະເມີນໜ່ວຍງານຂອງພາກລັດທີ່ຮັບຜິດຊອບການຈັດການຂີ້ເຫຍື້ອ ແລະ ປະເມີນອັດຕາສ່ວນຂອງພົນລະເມືອງທີ່ມີສ່ວນກ່ຽວຂ້ອງໃນການຖິ້ມຂີ້ເຫຍື້ອ (ມີບ່ອນຖິ້ມຂີ້ເຫຍື້ອທີ່ຢູ່ໃກ້ກັບບ່ອນຢູ່ອາໄສຂອງປະຊາຊົນ). ຖ້າບໍ່ມີໜ່ວຍງານຮັບຜິດຊອບ, ກໍໃຫ້ປະເມີນວິທີ ແລະ ຄວາມຖີ່ໃນການຖິ້ມຂີ້ເຫຍື້ອ.

#### 5.3.3. ການຈັດການ ແລະ ບຳບັດນ້ຳເປື້ອນ

ປະເມີນສະຖານທີ່ເກັບມ້ຽນນ້ຳເປື້ອນທີ່ປະຊາຊົນສາມາດນຳໃຊ້ໄດ້ ທີ່ພາກລັດໄດ້ກຳນົດໄວ້ ແລະ ອຸປະກອນບຳບັດສ່ວນບຸກຄົນຢູ່ຕາມສະຖານທີ່ທ່ອງທ່ຽວ ເຊັ່ນ: ຖັງວິດຊຶມ, ຖັງເກັບນ້ຳເປື້ອນ ແລະ ອຸປະກອນການບຳບັດນ້ຳ

ເປື້ອນ ເຊັ່ນ: ອ່າງບຳບັດນ້ຳເປື້ອນ.

### 5.3.4. ການຈັດການ ແລະ ກຳຈັດຂີ້ເຫຍື້ອ

ປະເມີນສະຖານທີ່ເກັບມ້ຽນຂີ້ເຫຍື້ອທີ່ປະຊາຊົນ ແລະ ຜູ້ປະກອບການທຸລະກິດທ່ອງທ່ຽວຕ່າງໆສາມາດນຳໃຊ້ໄດ້ທີ່ພາກລັດກຳນົດໄວ້ ເຊັ່ນ: ສະໜາມຂີ້ເຫຍື້ອ. ພ້ອມດຽວກັນນັ້ນ, ວິທີການນຳໃຊ້ເພື່ອກຳຈັດຂີ້ເຫຍື້ອກໍຈະຖືກປະເມີນເຊັ່ນດຽວກັນ ເຊັ່ນ: ການຈັດການຂີ້ເຫຍື້ອ, ການນຳເອົາສິ່ງເສດເຫຼືອມາໃຊ້ຄືນ, ການເຜົາ (ໃຊ້ເຕົາເຜົາສະເພາະ), ການຝັງ/ຖົມ.

### 5.3.5. ການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່

ຕົວຊີ້ວັດນີ້ປະເມີນວ່າພາກລັດໄດ້ຊຸກຍູ້ພາກສ່ວນຕ່າງໆໃຫ້ມີການນຳເອົາສິ່ງເສດເຫຼືອມາໃຊ້ຄືນ ແລະ ມີລະບົບເກັບມ້ຽນ ຫຼື ບໍ່. ນອກຈາກນີ້, ຍັງໝາຍເຖິງຄວາມຮັບຮູ້ ແລະ ຄວາມສຳຄັນຂອງການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່ຂອງປະຊາຊົນ ແລະ ໂດຍສະເພາະແມ່ນຜູ້ປະກອບທຸລະກິດການທ່ອງທ່ຽວ ເຊັ່ນ: ໂຮງແຮມ, ຮ້ານອາຫານ, ບໍລິສັດທ່ອງທ່ຽວ ແລະ ພາກສ່ວນອື່ນໆ.

## 5.4. ຕົວຊີ້ວັດການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ

ໝາຍເຖິງການເຄື່ອນໄຫວວຽກງານຕ່າງໆທີ່ມີ 3 ອົງປະກອບຫຼັກ ເຊັ່ນ: ຈຸດປະສົງໃນການປູກຈິດສຳນຶກ, ເປົ້າໝາຍໃນການຈັດຕັ້ງປະຕິບັດ ແລະ ເອກະສານທີ່ຊ່ວຍສະໜອງດ້ານຂໍ້ມູນ-ຂ່າວສານ. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ ໝາຍເຖິງການເຮັດໃຫ້ຄົນພາຍໃນປະເທດ, ນັກທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມເຂົ້າໃຈກ່ຽວກັບຜົນປະໂຫຍດດ້ານຄວາມສະອາດ, ສຸຂະອານາໄມ, ສຸຂະພິບານ ແລະ ສະພາບແວດລ້ອມທີ່ດີ.

ການປູກຈິດສຳນຶກແມ່ນຮູບແບບການສື່ງຄວາມຮູ້ (ໂດຍທົ່ວໄປແລ້ວກິດຈະກຳດັ່ງກ່າວເປັນວຽກງານທີ່ຈະຕ້ອງປະຕິບັດຢູ່ເລື້ອຍໆ). ເພາະສະນັ້ນ, ຈຸດປະສົງຂອງການປູກຈິດສຳນຶກແມ່ນເພື່ອເຜີຍແຜ່ຂໍ້ມູນ-ຂ່າວສານກ່ຽວກັບຄວາມເສຍຫາຍຈາກການຈັດຕັ້ງປະຕິບັດວຽກງານທີ່ບໍ່ຖືກຕ້ອງໃນແຕ່ລະມື້ ແລະ ການເຜີຍແຜ່/ອະທິບາຍທັດສະນະທີ່ຖືກຕ້ອງ ແລະ ການຈັດຕັ້ງປະຕິບັດມີສ່ວນຊ່ວຍໃນການປັບປຸງຄຸນນະພາບການດຳລົງຊີວິດ. ມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນຍັງເຮັດໃຫ້ປະຊາຊົນໃນທ້ອງຖິ່ນ, ບັນດາຜູ້ປະກອບການດ້ານການທ່ອງທ່ຽວ ແລະ ນັກທ່ອງທ່ຽວຮັບຮູ້ຄວາມສຳຄັນກ່ຽວກັບສິ່ງແວດລ້ອມ ແລະ ຄວາມສະອາດ.

ການປູກຈິດສຳນຶກ ແມ່ນກົນໄກຕົ້ນຕໍໃນການຊຸກຍູ້ການຈັດຕັ້ງປະຕິບັດມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ. ກົນໄກດັ່ງກ່າວຖືວ່າເປັນວຽກທີ່ສຳຄັນທີ່ບັນດາເມືອງຕ່າງໆຄວນລິເລີ່ມຈັດຕັ້ງປະຕິບັດ ເພື່ອເຜີຍແຜ່ໃຫ້ພາກສ່ວນທີ່ກ່ຽວຂ້ອງເຂົ້າໃຈ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວເທື່ອລະກ້າວ. ການຈັດຕັ້ງປະຕິບັດສາມາດເຮັດໄດ້ຫຼາຍວິທີ ໂດຍເລືອກເອົາວິທີທີ່ເໝາະສົມກັບສະພາບຄວາມເປັນຈິງຂອງເມືອງເຫຼົ່ານັ້ນ.

ນອກຈາກນີ້, ການປະເມີນຜົນຄວນເນັ້ນໃສ່ປະສິດທິພາບ, ຄວາມຕໍ່ເນື່ອງຂອງບັນດາກິດຈະກຳທີ່ກຳນົດໄວ້. ການປູກຈິດສຳນຶກສາມາດປະຕິບັດໄດ້ໂດຍການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ບັນດາອົງການຈັດຕັ້ງສາກົນ/ອົງການທີ່ບໍ່ສັງກັດລັດ (NGOs) ແລະ ພາກສ່ວນອື່ນໆ.

### 5.4.1. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ປະຊາຊົນໃນທ້ອງ ຖິ່ນ

ຕົວຊີ້ວັດນີ້ໃຊ້ປະເມີນບັນດາວຽກງານທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ເພື່ອປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ຊຶ່ງໜ້າວຽກເຫຼົ່ານີ້ໄດ້ຮັບການຈັດຕັ້ງປະຕິບັດເລື້ອຍໆປານໃດ ເຊັ່ນ: ການປະຊາສຳພັນ, ງານນິເທດສະການ, ການແຂ່ງຂັນ ແລະ ອື່ນໆ. ນອກຈາກນີ້, ຍັງມີເຖິງເຄື່ອງມືທີ່ໃຊ້ເຂົ້າໃນການປູກຈິດສຳນຶກ ເຊັ່ນ: ປື້ມຄູ່ມື, ແຜນພັບ, ປ້າຍ, ແຜ່ນໂພສເຕີ ແລະ ອື່ນໆ.

### 5.4.2. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ຜູ້ປະກອບການທ່ອງທ່ຽວ

ດັ່ງທີ່ລະບຸມາຂ້າງເທິງນັ້ນ, ຕົວຊີ້ວັດທີ່ປະເມີນບັນດາໜ້າວຽກງານຕ່າງໆທີ່ໄດ້ຮັບການຈັດຕັ້ງປະຕິບັດຜ່ານມາເພື່ອປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ຜູ້ປະກອບການດ້ານການທ່ອງທ່ຽວ ຊຶ່ງໜ້າວຽກງານເຫຼົ່ານີ້ໄດ້ຮັບການຈັດຕັ້ງປະຕິບັດເລື້ອຍໆປານໃດ ເຊັ່ນ: ການປະຊາສຳພັນ, ງານນິເທດສະການ, ການແຂ່ງຂັນ ແລະ ອື່ນໆ. ນອກຈາກນີ້, ຍັງລວມເຖິງເຄື່ອງມືທີ່ໃຊ້ເຂົ້າໃນການປູກຈິດສຳນຶກ ເຊັ່ນ: ປື້ມຄູ່ມື, ແຜ່ນພັບ, ປ້າຍ, ແຜ່ນໂພສເຕີ ແລະ ອື່ນໆ.

### 5.4.3. ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດໃຫ້ແກ່ນັກທ່ອງທ່ຽວ

ຕົວຊີ້ວັດນີ້ປະເມີນລະດັບຂໍ້ມູນ-ຂ່າວສານທີ່ສະໜອງໃຫ້ແກ່ນັກທ່ອງທ່ຽວ ກ່ຽວກັບການເຄົາລົບນັບຖືຂໍ້ກຳນົດ, ລະບຽບດ້ານສິ່ງແວດລ້ອມ ແລະ ຄວາມສະອາດຂອງປະເທດນັ້ນ, ລວມທັງພາກລັດ ແລະ ພາກທຸລະກິດ ທີ່ພົວພັນກັບນັກທ່ອງທ່ຽວ.

## 5.5. ຕົວຊີ້ວັດພື້ນທີ່ສີຂຽວ

ພື້ນທີ່ສີຂຽວໃນຕົວເມືອງຕ່າງໆ ແມ່ນພື້ນທີ່ທີ່ຄົນທົ່ວໄປສາມາດເຂົ້າທ່ຽວຊົມໄດ້ ເຊັ່ນ: ປະຊາຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ ບ່ອນທີ່ເຂົາເຈົ້າສາມາດພັກຜ່ອນ. ພື້ນທີ່ເຫຼົ່ານີ້ຄວນປະດັບປະດາດ້ວຍຕົ້ນໄມ້, ດອກໄມ້ ແລະ ຫຍ້າ.

ທາງວົງວຽນຖືວ່າບໍ່ແມ່ນພື້ນທີ່ສີຂຽວ ເພາະມີຈຸດປະສົງໃຊ້ສຳລັບລະບາຍການຈາລະຈອນ ບໍ່ໄດ້ໃຊ້ເປັນພື້ນທີ່ໃຫ້ຄົນພັກຜ່ອນ. ພື້ນທີ່ສີຂຽວຄວນແຕກຕ່າງຈາກ "ສະຖານທີ່ທ່ອງທ່ຽວທາງທຳມະຊາດ", ເຖິງແມ່ນວ່າສະຖານທີ່ທ່ອງທ່ຽວທາງທຳມະຊາດນີ້ຈະເຊື່ອມຕໍ່ ແລະ ອ້ອມຮອບໄປດ້ວຍພື້ນທີ່ສີຂຽວກໍຕາມ. ນອກຈາກນັ້ນ, ຫ້າມບັນດາ

ເມືອງເຫຼົ່ານີ້ເກັບເງິນນຳນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມພື້ນທີ່ສີຂຽວນີ້ ດັ່ງທີ່ເຄີຍເກີດຂຶ້ນຢູ່ບາງແຫ່ງ.

ພື້ນທີ່ສີຂຽວຊ່ວຍປັບປຸງສະພາບຄວາມເປັນຢູ່ໃຫ້ດີຂຶ້ນ ໂດຍມີພື້ນທີ່ທາງທຳມະຊາດຢູ່ໃນເຂດຕົວເມືອງ. ໂດຍທົ່ວໄປແລ້ວ, ພື້ນທີ່ສີຂຽວບາງແຫ່ງກໍມີຢູ່ໃນເມືອງຕ່າງໆແລ້ວ. ດັ່ງນັ້ນ, ມາດຕະຖານແມ່ນແນໃສ່ເພື່ອສົ່ງເສີມການນຳໃຊ້ພື້ນທີ່ສີຂຽວໂດຍເນັ້ນໃສ່ປະລິມານ ແລະ ການຄຸ້ມຄອງທີ່ດີ.

ມາດຕະຖານດັ່ງກ່າວມີຈຸດປະສົງໃຫ້ບັນດາເມືອງຕ່າງໆຈັດຕັ້ງປະຕິບັດການດູແລຮັກສາ ແລະ ຄຸ້ມຄອງພື້ນທີ່ສີຂຽວໃຫ້ເປັນຮູບແບບທີ່ສະດວກ ແລະ ເໝາະສົມ.

### 5.5.1. ຈຳນວນພື້ນທີ່ສີຂຽວໃນເມືອງ

ປະເມີນພື້ນທີ່ຢູ່ໃນຕົວເມືອງ ແລະ ຈັດສັນເປັນພື້ນທີ່ສີຂຽວ.

### 5.5.2. ການບຳລຸງຮັກສາ ແລະ ຄຸ້ມຄອງພື້ນທີ່ສີຂຽວ

ຕົວຊີ້ວັດນີ້ປະເມີນວ່າພື້ນທີ່ດັ່ງກ່າວໄດ້ຮັບການບຳລຸງຮັກສາເລື້ອຍໆປານໃດ, ມີໂຄງການປັບປຸງພື້ນທີ່ດັ່ງກ່າວຄຸນນະພາບ ແລະ ການບົວລະບັດຮັກສາເຄື່ອງໃຊ້ສາທາລະນະບໍ່ ເຊັ່ນ: ໄຟຟ້າ, ຕັ່ງ, ທາງຍ່າງ ແລະ ອື່ນໆ. ລະບົບຄຸ້ມຄອງສິ່ງແວດລ້ອມ ເຊັ່ນ: ລະບົບປະຫຍັດພະລັງງານສຳລັບແສງສະຫວ່າງ, ລະບົບຊົນລະປະທານ, ການນຳໃຊ້ປຸ໋ຍຊີວະພາບ ແລະ ອື່ນໆ.

## 5.6. ຕົວຊີ້ວັດຄວາມປອດໄພດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມສະຫງົບໃນຕົວເມືອງ

***"ຄວາມປອດໄພ"*** ແມ່ນອົງປະກອບທີ່ສຳຄັນຂອງນະໂຍບາຍການທ່ອງທ່ຽວ. ຄວາມປອດໄພແມ່ນສະພາບການທີ່ບໍ່ມີຄວາມສ່ຽງ ຫຼື ມີຄວາມສ່ຽງຕ່ຳ. "ຄວາມປອດໄພ" ຕ້ອງໝາຍເຖິງສິດທິມະນຸດຂັ້ນພື້ນຖານ.

ຄວາມປອດໄພ ແລະ ຄວາມສະຫງົບແມ່ນຄວາມຮັບຜິດຊອບຂອງອຳນາດການປົກຄອງທ້ອງຖິ່ນນັ້ນ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ປະຊາຊົນທີ່ອາໄສຢູ່ໃນພື້ນທີ່ນັ້ນ ຊຶ່ງແມ່ນຈຸດປະສົງຫຼັກຂອງຕົວຊີ້ວັດນີ້. ຕົວຊີ້ວັດດັ່ງກ່າວແນໃສ່ເພື່ອໃຫ້ມີຄວາມສາມັກຄີ, ຄວາມເຂົ້າໃຈຊຶ່ງກັນ ແລະ ກັນລະຫວ່າງນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ. ການສົ່ງເສີມບັນດາເມືອງຕ່າງໆຕ້ອງໄດ້ມີການປະກອບສ່ວນໃນການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນໃນທຸກຮູບແບບນັ້ນ ເປັນການປະກອບສ່ວນເຂົ້າໃນການພັດທະນາການທ່ອງທ່ຽວໃຫ້ມີຄວາມປອດໄພ.

ຕົວຊີ້ວັດດັ່ງກ່າວນີ້ປະເມີນທັງປະລິມານ ແລະ ຄຸນນະພາບຂອງໂຮງໝໍ, ສຸກສາລາ, ຮ້ານຂາຍຢາ ແລະ ຜູ້ປະກອບການບໍລິການປິ່ນປົວທົ່ວໄປໃນເມືອງນັ້ນ ພ້ອມທັງປະເມີນຍຸດທະສາດການຄຸ້ມຄອງຄວາມສ່ຽງທີ່ມີຢູ່, ການກວດກາສຸຂະອານາໄມ, ການຄຸ້ມຄອງຄວາມເປັນລະບຽບຮຽບຮ້ອຍຂອງປະຊາຊົນ, ຄວາມປອດໄພໃນການເດີນທາງທ່ອງທ່ຽວພາຍໃນຕົວເມືອງ. ພ້ອມທັງເຜີຍແຜ່ຂໍ້ມູນໃຫ້ນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ ກ່ຽວກັບການປ້ອງກັນອາຊະຍະກຳ ແລະ ການບັງຄັບໃຊ້ກົດລະບຽບ.

### 5.6.1. ຄວາມປອດໄພດ້ານສຸຂະພາບ

ປະກອບມີ 2 ຮູບແບບຄື: 1) ການປະເມີນດ້ານປະລິມານ ແລະ ຄຸນນະພາບຂອງສະຖານທີ່ປິ່ນປົວຄົນເຈັບ (ໂຮງໝໍ, ຄຣີນິກ ແລະ ບ່ອນອື່ນໆ), ຮ້ານຂາຍຢາ ແລະ ຜູ້ປະກອບການບໍລິການປິ່ນປົວຄົນເຈັບທົ່ວໄປ; 2) ການກວດກາສຸຂະອານາໄມຢູ່ບ່ອນທີ່ມີນັກທ່ອງທ່ຽວຫຼາຍ ເຊັ່ນ: ຮ້ານອາຫານ, ຕະຫຼາດ, ຮ້ານອາຫານດ່ວນ (ອາຫານຈານດ່ຽວ), ຮ້ານຂາຍເຄື່ອງຕາມແຄມຖະໜົນ ແລະ ອື່ນໆ. ຕາມກົດໝາຍ ແລະ ກົດລະບຽບຂອງປະເທດນັ້ນ.

### 5.6.2. ຄວາມປອດໄພ ແລະ ການຮັກສາຄວາມສະຫງົບໃນຕົວເມືອງ

ຕົວຊີ້ວັດນີ້ປະເມີນລະດັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງສາມາດວັດແທກໄດ້ຈາກຈຳນວນຕຳຫຼວດ (ໂດຍສະເພາະຕຳຫຼວດທ່ອງທ່ຽວ) ແລະ ວິທີການທີ່ເຂົາເຈົ້າໄດ້ຮັບການຮ່ຳຮຽນ ແລະ ຝຶກອົບຮົມມາເພື່ອຮັບມື ແລະ ແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບນັກທ່ອງທ່ຽວ. ຄົນຂັບລົດແທັກຊີບໍລິການນັກທ່ອງທ່ຽວວ່າມີຄວາມສຸພາບ ແລະ ຊື່ສັດບໍ່ ຊຶ່ງບັນຫານີ້ກໍຄວນໄດ້ຮັບການພິຈາລະນາເຊັ່ນດຽວກັນ. ຕົວຊີ້ວັດອື່ນອາດໝາຍເຖິງຄວາມປອດໄພໃນການເດີນທາງອ້ອມຕົວເມືອງ (ການຈາລະຈອນ, ຄວາມແອອັດຕາມທ້ອງຖະໜົນ, ຄວາມປອດໄພຢູ່ຕາມທາງແຍກຕ່າງໆ, ທາງຍ່າງທີ່ປອດໄພ ແລະ ອື່ນໆ).

### 5.6.3. ການບັງຄັບໃຊ້ກົດໝາຍ ເພື່ອປ້ອງກັນອາຊະຍາກຳ ແລະ ການຄ້າໂສເພນີເດັກ, ຢາເສບຕິດ ແລະ ອື່ນໆ.

ຕົວຊີ້ວັດນີ້ຊ່ວຍໃຫ້ຮູ້ເຖິງຄວາມພະຍາຍາມໃນການປົກປ້ອງປະຊາກອນພາຍໃນປະເທດ ຈາກການກະທຳຜິດທີ່ຜິດຕໍ່ລະບຽບກົດໝາຍຕ່າງໆ ແລະ ເປັນການຫ້າມນັກທ່ອງທ່ຽວບໍ່ໃຫ້ກະທຳຜິດຕາມຄວາມຕ້ອງການຕົວເອງ ເຊັ່ນ: ການຄ້າປະເວນີເດັກ, ຢາເສບຕິດ, ການຄ້າຂາຍທີ່ຜິດກົດໝາຍ, ການນຳສິນຄ້າເຂົ້າ-ອອກຜິດກົດໝາຍ, ການທຳລາຍດ້ານສິ່ງແວດລ້ອມ, ຊັບສິນທາງດ້ານວັດທະນະທຳ ແລະ ອື່ນໆ. ຕົວຊີ້ວັດນີ້ຍັງປະເມີນການບັງຄັບໃຊ້ກົດລະບຽບ (ການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ) ລວມທັງປະສິດທິຜົນຂອງການໂຄສະນາປູກຈິດສຳນຶກ.

### 5.6.4. ແຜນການບໍລິຫານຄວາມສ່ຽງ

ຕົວຊີ້ວັດນີ້ປະເມີນຄວາມສາມາດຂອງປະເທດນັ້ນ ກ່ຽວກັບການຮັບມືກັບເຫດການທີ່ບໍ່ຄາດຄິດທີ່ອາດຈະເກີດຂຶ້ນ ເຊັ່ນ: ໄພທຳມະຊາດ ແລະ ອື່ນໆ. ນອກນັ້ນ, ຍັງປະເມີນຂອບເຂດ ແລະ ປະສິດທິຜົນຂອງແຜນການຮັບມືກັບຄວາມສ່ຽງ, ຖ້າຫາກມີ.

## 5.7. ຕົວຊີ້ວັດໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ

ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວແມ່ນຫຼັກການຂອງນະໂຍບາຍການພັດທະນາການທ່ອງທ່ຽວ. ການພັດທະນາການທ່ອງທ່ຽວແມ່ນອາໄສໂຄງລ່າງພື້ນຖານ, ການປະສານສົມທົບຊຶ່ງກັນ ແລະ ກັນ ແລະ ຄວາມພ້ອມ/ຄວາມຫຼັກຫຼາຍຂອງສິ່ງອຳນວຍຄວາມສະດວກຕ່າງໆ. ແນ່ນອນ, ຄວາມພ້ອມຂອງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ການເດີນທາງ ແລະ ຂົນສົ່ງ ຊຶ່ງ

ມີຄວາມສຳຄັນຫຼາຍຕໍ່ການທ່ອງທ່ຽວ. ຖ້າຫາກສິ່ງອຳນວຍຄວາມສະດວກບໍ່ພຽງພໍ ຫຼື ເປັນບັນຫາບໍ່ວ່າດ້ວຍເຫດຜົນໃດກໍຕາມ, ກໍຈະສົ່ງຜົນກະທົບຕໍ່ການພັດທະນາຕົວເມືອງ ແລະ ການຂະຫຍາຍຕົວຂອງການທ່ອງທ່ຽວໃນຕົວເມືອງ. ສິ່ງທີ່ສຳຄັນທີ່ສຸດກໍຄືບັນດາເມືອງຕ່າງໆຕ້ອງມີການວາງແຜນວຽກງານທ່ອງທ່ຽວທີ່ເໝາະສົມ ໂດຍຊີ້ໃຫ້ເຫັນບັນດາແຜນການ ແລະ ຍຸດທະສາດໃນການຄວບຄຸມ ແລະ ຂະບວນການພັດທະນາການທ່ອງທ່ຽວຢູ່ໃນເມືອງນັ້ນ. ໂຄງລ່າງພື້ນຖານດ້ານການທ່ອງທ່ຽວປະກອບມີ: ສູນຂໍ້ມູນ-ຂ່າວສານ, ປ້າຍຊີ້ບອກ ແລະ ແຜນທີ່ ລ້ວນແລ້ວແຕ່ມີຄວາມຈຳເປັນໃນການສະໜອງຂໍ້ມູນການທ່ອງທ່ຽວໃນເມືອງນັ້ນ ລວມທັງສະຖານທີ່ອື່ນໆທີ່ນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນສາມາດທ່ຽວຊົມ ແລະ ນຳໃຊ້ໄດ້ຕາມຄວາມເໝາະສົມ ເຊັ່ນ: ການພັກຜ່ອນ, ວັດທະນະທຳ, ສຶກສາຄົ້ນຄວ້າ, ຊື້ເຄື່ອງທີ່ລະນຶກ, ກິລາ ແລະ ອື່ນໆ ຈະຕ້ອງມີການແນະນຳຢູ່ໃນເມືອງນັ້ນ.

ຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວຈະລວມຢູ່ໃນຕົວຊີ້ວັດນີ້ ເພາະວ່າເມືອງຕ່າງໆຕ້ອງຮູ້ວ່າເມືອງຂອງຕົນຕ້ອງການປັບປຸງຫຍັງຕື່ມອີກ ເພື່ອດຶງດູດນັກທ່ອງທ່ຽວ ແລະ ເຊີນຊວນໃຫ້ເຂົາເຈົ້າພັກຢູ່ເມືອງນັ້ນດົນກ່ວາເກົ່າ.

### 5.7.1. ການວາງແຜນການທ່ອງທ່ຽວ

ແຜນພັດທະນາ ແລະ ແຜນຍຸດທະສາດທີ່ເປັນທາງການ ຫຼື ບໍ່ເປັນທາງການນັ້ນ ຄວນແນ່ໃສ່ການຄວບຄຸມການພັດທະນາການທ່ອງທ່ຽວໃນເມືອງນັ້ນ ເຊັ່ນ: ການແບ່ງເຂດ ແລະ ການນຳໃຊ້ທີ່ດິນສຳລັບເຂດທ່ອງທ່ຽວ, ລາຍການນຳທ່ຽວ, ການວາງແຜນຂົນສົ່ງນັກທ່ອງທ່ຽວ, ແຜນອານຸລັກວັດທະນະທຳ, ມໍລະດົກ ແລະ ອື່ນໆ.

### 5.7.2. ສູນຂໍ້ມູນ, ປ້າຍຊີ້ບອກ ແລະ ແຜນທີ່ທ່ອງທ່ຽວ

ປະເມີນວິທີ ແລະ ປະສິດທິຜົນໃນການສະໜອງຂໍ້ມູນການທ່ອງທ່ຽວໃນເມືອງນັ້ນ ເຊັ່ນ: ຂະໜາດ ແລະ ທີ່ຕັ້ງຂອງສູນຂໍ້ມູນ ແລະ ຄຸນນະພາບຂອງອຸປະກອນທີ່ມີຢູ່ພາຍໃນສູນຂໍ້ມູນ, ປ້າຍຊີ້ບອກຕ່າງໆຢູ່ພາຍໃນເມືອງນັ້ນ ແລະ ມີແຜນທີ່ບອກສະຖານທີ່ທ່ອງທ່ຽວຕາມຈຸດຕ່າງໆຢູ່ໃນເມືອງນັ້ນ.

### 5.7.3. ທີ່ຕັ້ງສູນການຄ້າ ແລະ ຮ້ານຂາຍເຄື່ອງ

ປະເມີນສະຖານທີ່ທີ່ນັກທ່ອງທ່ຽວສາມາດຊອກຊື້ເຄື່ອງທີ່ເຂົາເຈົ້າຕ້ອງການ, ສະຖານທີ່ຂາຍສິ່ງຂອງເຫຼົ່ານັ້ນຢູ່ໃກ້ສະຖານທີ່ທ່ອງທ່ຽວ, ຢູ່ໃຈກາງເມືອງ, ເຂົ້າເຖິງງ່າຍ, ມີຄຸນນະພາບ, ລາຄາສິນຄ້າມີຄວາມເໝາະສົມບໍ່.

### 5.7.4. ສະຖານທີ່ພັກຜ່ອນ (ສະຖານທີ່ທ່ອງທ່ຽວ, ສວນສາທາລະນະ, ເດີ່ນກິລາ ແລະ ບ່ອນພັກຜ່ອນ)

ຕົວຊີ້ວັດນີ້ໃຊ້ປະເມີນບັນດາກິດຈະກຳທີ່ຈັດໄວ້ໃຫ້ນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນນັ້ນກໍສາມາດໃຊ້ບໍລິການ ແລະ ຊື້ໄດ້.

### 5.7.5. ລະດັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ

ຈຳເປັນຕ້ອງມີການກວດສອບເບິ່ງວ່າ ນັກທ່ອງທ່ຽວມີຄວາມເພິ່ງພໍໃຈກັບເມືອງດັ່ງກ່າວຫຼາຍປານໃດ ເຊັ່ນ: ຄວາມສະອາດ, ການບໍລິການ, ການຕ້ອນຮັບ, ຄວາມປອດໄພ, ຄວາມເພິ່ງພໍໃຈຕໍ່ການຕົບແຕ່ງ ລວມທັງສິ່ງແວດລ້ອມ ແລະ ອື່ນໆ ແນ່ໃສ່ເພື່ອຊອກຫາຈຸດທີ່ຄວນປັບປຸງ. ການສຳຫຼວດແມ່ນມີຄວາມຈຳເປັນຫຼາຍໃນການປະເມີນ ແລະ ວິ

ເຄາະຂໍ້ມູນຕ່າງໆ ຊຶ່ງຕົວຊີ້ວັດນີ້ຈະປະເມີນວ່າການສຳຫຼວດນີ້ມີປະສິດທິພາບ ຫຼື ບໍ່, ການດຳເນີນການສຳຫຼວດເລື້ອຍໆ ປານໃດ ແລະ ຖ້າມີມາດຕະການຈັດຕັ້ງປະຕິບັດເພື່ອປັບປຸງເມືອງດັ່ງກ່າວ ແມ່ນຈະອີງໃສ່ຂໍ້ມູນທີ່ໄດ້ຈາກການສຳຫຼວດ ນັ້ນ.

# 6. ເງື່ອນໄຂຂອງມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ

## 6.1. ຕາຕະລາງປະເມີນຜົນການຄຸ້ມຄອງສິ່ງແວດລ້ອມ ມີຈຳນວນ 5 ຕົວຊີ້ວັດ

| ການຄຸ້ມຄອງສິ່ງແວດລ້ອມ | | ເງື່ອນໄຂ | ການປະເມີນ | ຄະແນນ |
|---|---|---|---|---|
| 1 | ຜັງເມືອງ | ມີແຜນແມ່ບົດກ່ຽວກັບການນຳໃຊ້ທີ່ດິນສຳລັບເມືອງນີ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ໄດ້ຈັດຕັ້ງປະຕິບັດຕາມແຜນດັ່ງກ່າວບໍ່? | ປະຕິບັດ<br>ບໍ່ໄດ້ປະຕິບັດ | ☐<br>☐ |
| | | ໄດ້ຈັດແບ່ງເຂດຕາມແຜນການແບ່ງເຂດບໍ່? | ຈັດແບ່ງ<br>ບໍ່ໄດ້ຈັດແບ່ງ | ☐<br>☐ |
| | | ມີແຜນການຂົນສົ່ງສຳລັບຕົວເມືອງນີ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ວຽກງານດ້ານສິ່ງແວດລ້ອມໄດ້ລະບຸຢູ່ໃນແຜນການດັ່ງກ່າວບໍ່? | ລະບຸ<br>ບໍ່ໄດ້ລະບຸ | ☐<br>☐ |
| | | ວຽກງານດ້ານສິ່ງແວດລ້ອມໄດ້ຮັບການເອົາໃຈໃສ່ບໍ່? | ເອົາໃຈໃສ່<br>ບໍ່ໄດ້ເອົາໃຈໃສ່ | ☐<br>☐ |
| 2 | ກົດລະບຽບກ່ຽວກັບສິ່ງແວດລ້ອມ | ມີກົດລະບຽບດ້ານສິ່ງແວດລ້ອມເພື່ອຄຸ້ມຄອງການດຳເນີນກິດຈະການຂອງພາກທຸລະກິດທ່ອງທ່ຽວບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ກົດລະບຽບເຫຼົ່ານີ້ໄດ້ຮັບການຈັດຕັ້ງປະຕິບັດຢູ່ໃນເມືອງນີ້ບໍ່? | ປະຕິບັດ<br>ບໍ່ປະຕິບັດ | ☐<br>☐ |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ອອກກົດລະບຽບກ່ຽວກັບຄຸນນະພາບນ້ຳບໍ່? | ໄດ້<br>ບໍ່ໄດ້ | ☐<br>☐ |
| | | ກົດລະບຽບກ່ຽວກັບຄຸນນະພາບນ້ຳໄດ້ຈັດຕັ້ງປະຕິບັດຢູ່ໃນເມືອງນີ້ບໍ່? | ປະຕິບັດ<br>ບໍ່ປະຕິບັດ | ☐<br>☐ |
| | | ຄຸນນະພາບນ້ຳຢູ່ໃນເມືອງນີ້ໄດ້ກຳນົດໄວ້ໃນກົດລະບຽບບໍ່? | ກຳນົດ<br>ບໍ່ໄດ້ກຳນົດ | ☐<br>☐ |

| | | | | |
|---|---|---|---|---|
| 3 | **ມົນລະພິດ** | ພາກສ່ວນທີ່ກ່ຽວຂ້ອງໄດ້ອອກກົດລະບຽບກ່ຽວກັບຄຸນນະພາບອາກາດບໍ່? | ແມ່ນ<br>ບໍ່ແມ່ນ | ☐<br>☐ |
| | | ກົດລະບຽບກ່ຽວກັບຄຸນນະພາບອາກາດໄດ້ນຳໃຊ້ຢູ່ໃນເມືອງນີ້ບໍ່? | ໃຊ້<br>ບໍ່ໃຊ້ | ☐<br>☐ |
| | | ໄດ້ມີການເຜີຍແຜ່ກ່ຽວກັບກົດລະບຽບຄຸນນະພາບນໍ້າ ແລະ ອາກາດໃຫ້ປະຊາຊົນຮັບຮູ້ບໍ່? | ເຜີຍແຜ່<br>ບໍ່ໄດ້ເຜີຍແຜ່ | ☐<br>☐ |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ແນະນຳມາດຕະການຕ່າງໆ ເພື່ອຫຼຸດຜ່ອນມົນລະພິດທາງອາກາດຢູ່ໃນເມືອງນີ້ບໍ່ ຕົວຢ່າງ: ການຫຼຸດຜ່ອນການຈາລະຈອນແອອັດ, ເຄື່ອງກັ່ນຕອງສານເຄມີ, ການນຳໃຊ້ນໍ້າມັນ ແລະ ອື່ນໆ. | ແນະນຳ<br>ບໍ່ແນະນຳ | ☐<br>☐ |
| | | ມາດຕະການເຫຼົ່ານີ້ໄດ້ຈັດຕັ້ງປະຕິບັດຢູ່ໃນເມືອງນີ້ບໍ່? | ປະຕິບັດ<br>ບໍ່ປະຕິບັດ | ☐<br>☐ |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ແນະນຳມາດຕະການຄວບຄຸມມົນລະພິດທາງສຽງບໍ່? | ແນະນຳ<br>ບໍ່ແນະນຳ | ☐<br>☐ |
| | | ມາດຕະການຄວບຄຸມມົນລະພິດທາງສຽງໄດ້ນຳໃຊ້ໃນຢູ່ໃນເມືອງນີ້ບໍ່? | ໃຊ້<br>ບໍ່ໃຊ້ | ☐<br>☐ |
| 4 | **ການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມ** | ມີລະບົບຂົນສົ່ງສາທາລະນະຢູ່ໃນເມືອງນີ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ແນະນຳການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມຢູ່ໃນເມືອງນີ້ບໍ່ ເຊັ່ນ: ວິທີການຄວບຄຸມມົນລະພິດ. | ແນະນຳ<br>ບໍ່ແນະນຳ | ☐<br>☐ |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ກຳນົດກົດລະບຽບການຄວບຄຸມມົນລະພິດຈາກການຈາລະຈອນຢູ່ເມືອງນີ້ບໍ່ ເຊັ່ນ: ຫ້າມພາຫະນະທີ່ປ່ອຍຄວັນຫຼາຍ, ເກັບເງິນເຂດທີ່ມີການຈາລະຈອນແອອັດໃນເມືອງ ແລະ ອື່ນໆ. | ກຳນົດ<br>ບໍ່ກຳນົດ | ☐<br>☐ |
| | | ລະບຽບເຫຼົ່ານີ້ໄດ້ນຳໃຊ້ຢູ່ໃນເມືອງນີ້ບໍ່? | ໃຊ້<br>ບໍ່ໃຊ້ | ☐<br>☐ |
| | | ອັດຕາສ່ວນພາຫານະທີ່ເປັນມິດກັບສິ່ງແວດລ້ອມ ແລະ ພາຫານະບໍ່ມີເຄື່ອງຈັກຖ້າປຽບທຽບໃສ່ຈຳນວນພາຫານະທັງໝົດມີຈຳນວນເທົ່າໃດ? | ________%<br>(ຢ່າງໜ້ອຍ 30% ຂອງຈຳນວນທັງໝົດຈຶ່ງຈະໄດ້ຄະແນນ | |
| | | ພາກສ່ວນທີ່ກ່ຽວຂ້ອງໄດ້ຊຸກຍູ້ໃຫ້ປະຊາຊົນນຳໃຊ້ການ | ຊຸກຍູ້ | ☐ |

| | | | | |
|---|---|---|---|---|
| | | ຂົນສົ່ງທີ່ບໍ່ມີເຄື່ອງຈັກບໍ່ ເຊັ່ນ: ຂີ່ລົດຖີບ ແລະ ຍ່າງ. | ບໍ່ຊຸກຍູ້ | ☐ |
| 5 | **ການນຳໃຊ້ພະລັງງານແບບຍືນຍົງ** | ອັດຕາສ່ວນໂຮງແຮມໃນເມືອງນີ້ນຳໃຊ້ອຸປະກອນປະຫຍັດພະລັງງານ (ເຊັ່ນ: ດອກໄຟປະຫຍັດ, ປຸ່ມເປີດ-ປິດ, ການນຳໃຊ້ກະແຈຊະນິດບັດ ແລະ ອື່ນໆ) ແລະ ພະລັງງານທີ່ນຳມາໃຊ້ໃໝ່ ມີເທົ່າໃດ? | ໜ້ອຍກ່ວາ 50%<br>ຫຼາຍກ່ວາ 50% (ຕ້ອງຫຼາຍກ່ວາ 50% ຈຶ່ງຈະໄດ້ຄະແນນ) | ☐<br>☐ |
| | | ອັດຕາສ່ວນຮ້ານອາຫານໃນເມືອງນີ້ໄດ້ນຳໃຊ້ອຸປະກອນປະຫຍັດພະລັງງານ (ເຊັ່ນ: ດອກໄຟປະຫຍັດ, ປຸ່ມເປີດ-ປິດ, ການນຳໃຊ້ກະແຈຊະນິດບັດ ແລະ ອື່ນໆ) ແລະ ພະລັງງານທີ່ນຳມາໃຊ້ໃໝ່ມີເທົ່າໃດ? | ໜ້ອຍກ່ວາ 50%<br>ຫຼາຍກ່ວາ 50% (ຕ້ອງຫຼາຍກ່ວາ 50%ຈຶ່ງຈະໄດ້ຄະແນນ) | ☐<br>☐ |
| | | ບັນດາທຸລະກິດທີ່ຕິດພັນກັບການທ່ອງທ່ຽວຮັບຮູ້ວິທີການປະຫຍັດພະລັງງານ ໂດຍຜ່ານການໂຄສະນາບໍ່? | ຮັບຮູ້<br>ບໍ່ຮູ້ຮັບຮູ້ | ☐<br>☐ |
| | | ມີການໃຫ້ລາງວັນແກ່ຜູ້ນຳໃຊ້ພະລັງງານແບບຍືນຍົງບໍ່? | ມີ<br>ບໍ່ມີ | ☐<br>☐ |
| - **ຈຳນວນຕົວຊີ້ວັດ: 5 ຕົວ**<br>- **ຈຳນວນເງື່ອນໄຂ: 28 ເງື່ອນໄຂ** | | | **ລວມ** | 28 |

## 6.2. ຕາຕະລາງປະເມີນຜົນຄວາມສະອາດ ມີຈຳນວນ 4 ຕົວຊີ້ວັດ

| **ຄວາມສະອາດ** | | **ເງື່ອນໄຂ** | **ການປະເມີນ** | **ຄະແນນ** |
|---|---|---|---|---|
| 1 | **ຄວາມສະອາດຂອງສະຖານທີ່ສາ** | ພາກສ່ວນທີ່ກ່ຽວໄດ້ທຳຄວາມສະອາດສະຖານທີ່ສາທາລະນະເລື້ອຍໆປານໃດ? | 1 ຄັ້ງ/ມື້ ຫຼື ຫຼາຍກ່ວານັ້ນ (ຢ່າງໜ້ອຍ 1 ຄັ້ງ/ມື້ຈຶ່ງຈະໄດ້ຄະແນນ)<br>ໜ້ອຍກ່ວາ 1 | ☐<br>☐ |

| | | | | |
|---|---|---|---|---|
| | **ທາລະນະ** | | ຄັ້ງ/ມື້ | |
| | | ອຸປະກອນໃນສະຖານທີ່ສາທາລະນະ ເຊັ່ນ: ຕັ່ງ, ດອກໄຟ, ໄຟເຍືອງທາງ, ບ່ອນລໍຖ້າຂຶ້ນລົດເມ ແລະ ອື່ນໆ ໄດ້ຮັບການສ້ອມແປງ ແລະ ທຳຄວາມສະອາດເປັນປົກກະຕິບໍ່? | ປົກກະຕິ<br>ບໍ່ປົກກະຕິ | ☐<br>☐ |
| | | ຢູ່ສະຖານທີ່ສາທາລະນະມີຖັງຂີ້ເຫຍື້ອພຽງພໍບໍ່? | ພຽງພໍ<br>ບໍ່ພຽງພໍ | ☐<br>☐ |
| | | ໄດ້ເອົາຂີ້ເຫຍື້ອຈາກຖັງຂີ້ເຫຍື້ອໄປຖິ້ມປົກກະຕິບໍ່? | ປົກກະຕິ<br>ບໍ່ປົກກະຕິ | ☐<br>☐ |
| | | ໄດ້ຕິດປ້າຍຊີ້ບອກຢ່າງເໝາະສົມບໍ່? | ຕິດ<br>ບໍ່ຕິດ | ☐<br>☐ |
| 2 | **ຄວາມສະອາດຂອງຫ້ອງນ້ຳສາທາລະນະ** | ຫ້ອງນ້ຳສາທາລະນະໄດ້ທຳຄວາມສະອາດ ແລະ ສ້ອມແປງປົກກະຕິບໍ່? (ອີງໃສ່ມາດຕະຖານຫ້ອງນ້ຳສາທາລະນະສະອາດອາຊຽນ) | ປົກກະຕິ<br>ບໍ່ປົກກະຕິ | ☐<br>☐ |
| | | ຫ້ອງນ້ຳໄດ້ທຳຄວາມສະອາດເລື້ອຍໆປານໃດ? | 2 ຄັ້ງ/ມື້ ຫຼື ຫຼາຍກ່ວານັ້ນ (ຢ່າງໜ້ອຍ2 ຄັ້ງ/ມື້ ຈຶ່ງຈະໄດ້ຄະແນນ)<br>ໜ້ອຍກ່ວາ2 ຄັ້ງ/ມື້ | ☐<br>☐ |
| | | ມີການແບ່ງຫ້ອງນ້ຳ ຊາຍ, ຍິງ ແລະ ຄົນພິການບໍ່? | ແບ່ງ<br>ບໍ່ແບ່ງ | ☐<br>☐ |
| | | ມີປ້າຍຊີ້ບອກທາງໄປຫ້ອງນ້ຳບໍ່? | ມີ<br>ບໍ່ມີ | ☐<br>☐ |
| 3 | **ຄວາມສະອາດຂອງສະຖານທີ່ທ່ອງທ່ຽວ** | ບໍລິເວນສະຖານທີ່ທ່ອງທ່ຽວໄດ້ທຳຄວາມສະອາດເປັນພິເສດບໍ່? | ເອົາໃຈໃສ່<br>ບໍ່ເອົາໃຈໃສ່ | ☐<br>☐ |
| | | ບໍລິເວນສະຖານທີ່ທ່ອງທ່ຽວໄດ້ທຳຄວາມສະອາດເລື້ອຍໆປານໃດ? | 2 ຄັ້ງ/ມື້ ຫຼື ຫຼາຍກ່ວານັ້ນ (ຢ່າງໜ້ອຍ2 ຄັ້ງ/ມື້ ຈຶ່ງຈະໄດ້ຄະແນນ)<br>ໜ້ອຍກ່ວາ2 ຄັ້ງ/ມື້ | ☐<br>☐ |

| | | | | |
|---|---|---|---|---|
| | | ຢູ່ສະຖານທີ່ທ່ອງທ່ຽວມີຖັງຂີ້ເຫຍື້ອພຽງພໍບໍ່? | ພຽງພໍ<br>ບໍ່ພຽງພໍ | ☐<br>☐ |
| | | ຢູ່ສະຖານທີ່ທ່ອງທ່ຽວມີຫ້ອງນໍ້າພຽງພໍບໍ່? | ພຽງພໍ<br>ບໍ່ພຽງພໍ | ☐<br>☐ |
| | | ຢູ່ສະຖານທີ່ທ່ອງທ່ຽວມີປ້າຍຊີ້ບອກຢ່າງເໝາະສົມບໍ່? | ມີ<br>ບໍ່ມີ | ☐<br>☐ |
| 4 | **ຄວາມສະອາດຕາມຖະໜົນສາຍຫຼັກ** | ພາກສ່ວນທີ່ກ່ຽວໄດ້ທຳຄວາມສະອາດບໍລິເວນອ້ອມຂ້າງຖະໜົນສາຍຫຼັກຢູ່ເມືອງນີ້ເລື້ອຍໆປານໃດ? | 2 ຄັ້ງ/ມື້ ຫຼື ຫຼາຍກ່ວານັ້ນ (ຢ່າງໜ້ອຍ2 ຄັ້ງ/ມື້ ຈຶ່ງຈະໄດ້ຄະແນນ).<br>ໜ້ອຍກ່ວາ2 ຄັ້ງ/ມື້ | ☐<br>☐ |
| | | ອຸປະກອນທີ່ນຳໃຊ້ມີຄວາມເໝາະສົມບໍ (ຖັງຂີ້ເຫຍື້ອໄລຍະຫ່າງແຕ່ລະຈຸດ) ? | ເໝາະສົມ<br>ບໍ່ເໝາະສົມ | ☐<br>☐ |
| - **ຈຳນວນຕົວຊີ້ວັດ: 4 ຕົວ**<br>- **ຈຳນວນເງື່ອນໄຂ: 16 ເງື່ອນໄຂ** | | | **ລວມທັງໝົດ:** | **16** |

## 6.3. ຕາຕະລາງປະເມີນຜົນການຈັດການສິ່ງເສດເຫຼືອ ມີຈຳນວນ 5 ຕົວຊີ້ວັດ

| ການຈັດການສິ່ງເສດເຫຼືອ | | ເງື່ອນໄຂ | ການປະເມີນ | ຄະແນນ |
|---|---|---|---|---|
| | | ມີລະບົບຈັດການນໍ້າເປື້ອນຢູ່ໃນເມືອງນີ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ມີກົດລະບຽບສະເພາະກ່ຽວກັບການຈັດການນໍ້າເປື້ອນບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ມີມາດຕະການລົງໂທດຜູ້ບໍ່ປະຕິບັດຕາມລະບຽບບໍ່? | ມີ<br>ບໍ່ມີ | ☐<br>☐ |

| | | | | |
|---|---|---|---|---|
| 1 | **ການຈັດການນ້ຳເປື້ອນ** | ປະຊາກອນຜູ້ທີ່ນຳໃຊ້ລະບົບລະບາຍນ້ຳໃນເມືອງນີ້ ມີຈັກເປີເຊັນ? | ____ %<br>(ຢ່າງໜ້ອຍ 70%ຈຶ່ງຈະໄດ້ຄະແນນ | |
| | | ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວທີ່ໃຊ້ລະບົບລະບາຍນ້ຳເປື້ອນ ມີຈັກເປີເຊັນ? | ____ %<br>(ຢ່າງໜ້ອຍ 70% ຈຶ່ງຈະໄດ້ຄະແນນ | |
| | | ມີວິທີຈັດການນ້ຳເປື້ອນຄືແນວໃດ? | - ຖັງວິດຊຶມລວມ<br>- ຖັງວິດຊຶມແຍກ<br>- ຖັງແຫ້ງ (ສຳລັບລະບາຍນ້ຳ)<br>- ບໍ່ມີລະບົບຈັດການນ້ຳເປື້ອນ (ບໍ່ໄດ້ຄະແນນ) | ☐<br>☐<br>☐<br>☐ |
| 2 | **ການຈັດການຂີ້ເຫຍື້ອ** | ພາກລັດເປັນຜູ້ເກັບມ້ຽນຂີ້ເຫຍື້ອບໍ່? | ແມ່ນ<br>ບໍ່ແມ່ນ | ☐<br>☐ |
| | | ຖ້າບໍ່ແມ່ນ, ພາກສ່ວນໃດເປັນຜູ້ເກັບມ້ຽນຂີ້ເຫຍື້ອ? | ບໍລິສັດເອກະຊົນ<br>ພາກສ່ວນອື່ນ ເຊັ່ນ: ອົງການບໍ່ສັງກັດລັດ (ຈົ່ງລະບຸ) | ☐<br>☐ |
| | | ຂີ້ເຫຍື້ອໄດ້ເກັບມ້ຽນເລື້ອຍໆປານໃດ? | 1 ຄັ້ງ/ມື້ ຫຼື ຫຼາຍກວ່ານັ້ນ (ຢ່າງໜ້ອຍ1ຄັ້ງ/ມື້ຈຶ່ງຈະໄດ້ຄະແນນ)<br>ໜ້ອຍກວ່າ 1 ຄັ້ງ/ມື້ | ☐<br>☐ |

| | | | | |
|---|---|---|---|---|
| | | ມີຈັກເປີເຊັນຂອງປະຊາກອນໃນຕົວເມືອງທີ່ນອນຢູ່ໃນເຂດບໍລິການເກັບມ້ຽນຂີ້ເຫຍື້ອ | _____ %(ຢ່າງໜ້ອຍ70%ຈຶ່ງຈະໄດ້ຄະແນນ | |
| | | ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວທີ່ຢູ່ໃນເຂດບໍລິການຂີ້ເຫຍື້ອທີ່ຖືກຕ້ອງຕາມລະບຽບມີຈັກເປີເຊັນ? | _____ %(ຢ່າງໜ້ອຍ70%ຈຶ່ງຈະໄດ້ຄະແນນ | |
| 3 | **ບ່ອນເກັບມ້ຽນ ແລະ ບຳບັດນ້ຳເປື້ອນ** | ມີບ່ອນເກັບມ້ຽນນ້ຳເປື້ອນ ຊຶ່ງປະຊາຊົນສາມາດນຳໃຊ້ໄດ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ມີອຸປະກອນເກັບນ້ຳເປື້ອນຢູ່ໃກ້ສະຖານທີ່ທ່ອງທ່ຽວບໍ່ຕົວຢ່າງຖັງຊຶມ | ມີ<br>ບໍ່ມີ | ☐<br>☐ |
| | | ມີອ່າງ/ໂຮງງານບຳບັດນ້ຳເປື້ອນຢູ່ໃກ້ເມືອງນີ້ບໍ່? | ມີ<br>ບໍ່ມີ | ☐<br>☐ |
| 4 | **ບ່ອນເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ** | ມີສະໜາມຖິ້ມຂີ້ເຫຍື້ອຢູ່ໃກ້ເມືອງນີ້ບໍ່ ເຊັ່ນ: ຝັງດິນ, ເຕົາເຜົາ | ມີ<br>ບໍ່ມີ | ☐<br>☐ |
| | | ມີສະຖານທີ່ບຳບັດ ແລະ ນຳຂີ້ເຫຍື້ອມາໃຊ້ຄືນບໍ່? | ມີ<br>ບໍ່ມີ | ☐<br>☐ |
| 5 | **ການນຳເອົາສິ່ງເສດເຫຼືອມາໃຊ້ຄືນໃໝ່** | ພາກສ່ວນທີ່ກ່ຽວຂ້ອງໄດ້ສົ່ງເສີມໃຫ້ປະຊາຊົນນຳເອົາສິ່ງເສດເຫຼືອມານຳໃຊ້ຄືນໃໝ່ ບໍ່? | ສົ່ງເສີມ<br>ບໍ່ສົ່ງເສີມ | ☐<br>☐ |
| | | ມີວິທີການເກັບຂີ້ເຫຍື້ອທີ່ເປັນສານພິດ ແລະ ຕິດເຊື້ອ ບໍ່? | ມີ<br>ບໍ່ມີ | ☐<br>☐ |
| | | ມີອຸປະກອນທີ່ເໝາະສົມໃນການນຳເອົາຂີ້ເຫຍື້ອມາໃຊ້ຄືນໃໝ່ບໍ່ ເຊັ່ນ: ຖັງແຍກຂີ້ເຫຍື້ອແບບສາມຖັງ ແລະ ອື່ນໆ. | ມີ<br>ບໍ່ມີ | ☐<br>☐ |
| | | ມີການປຸກລະດົມໃຫ້ປະຊາຊົນທ້ອງຖິ່ນ ແລະ ຜູ້ປະກອບການທຸກິດທ່ອງທ່ຽວໃນການນຳເອົາຂີ້ເຫຍື້ອມາໃຊ້ຄືນບໍ່? | ມີ<br>ບໍ່ມີ | ☐<br>☐ |
| **- ຈຳນວນຕົວຊີ້ວັດ: 5 ຕົວ<br>- ຈຳນວນເງື່ອນໄຂ: 20 ເງື່ອນໄຂ** | | | **ລວມທັງໝົດ** | **20** |

**6.4. ຕາຕະລາງປະເມີນຜົນການປູກຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສະອາດ ມີຈຳນວນ 3 ຕົວຊີ້ວັດ.**

